# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

01-04 ພະຈິກ 2022
ປີທີ 11
ສະບັບທີ 888

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na


## ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍຄະນະ ສຳເລັດການຢ້ຽມຢາມຣາຊະອານາຈັກໄທ ຢ່າງເປັນທາງການ

(ສພຊ) ໂດຍຕອບສະໜອງຕາມການເຊື້ອເຊີນຂອງພະນະທ່ານ ຊວນ ຫລີກໄພ ປະທານສະພາຜູ້ແທນຣາຊະດອນ ແຫ່ງ ຣາຊະອານາຈັກໄທ, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ໄດ້ສຳເລັດການຢ້ຽມຢາມ ຣາຊະອານາຈັກໄທ ຢ່າງເປັນທາງການ ໃນລະຫວ່າງວັນທີ 26-31 ຕຸລາ 2022 ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ຖານບ້ານໃກ້ເຮືອນຄຽງທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດ ລາວ-ໄທ ກໍຄືລະຫວ່າງ ສອງອົງການນິຕິບັນຍັດ ໃຫ້ນັບມື້ນັບຈະເລີນງອກງາມຂຶ້ນ.




ໃນໄລຍະຢ້ຽມຢາມ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF) ຄັ້ງທີ 30 ທີ່ບາງກອກ ຣາຊະອານາຈັກໄທ ໂດຍມີຄະນະຜູ້ແທນລັດຖະສະພາ ຈາກ 24 ປະເທດທີ່ເປັນສະມາຊິກຂອງອົງການ APPF, ບັນດາປະເທດສັງເກດການ ພ້ອມດ້ວຍຕາງໜ້າຈາກບັນດາອົງການລັດຖະສະພາພາກພື້ນ ແລະ ສາກົນ ເຂົ້າຮ່ວມ ເຊິ່ງຄະນະຜູ້ແທນ ໄດ້ລົງເລິກປຶກສາຫາລື ແລະ ຄົ້ນຄວ້າພິຈາລະນາຮ່າງມະຕິທັງໝົດ ຈຳນວນ 34 ສະບັບ ທີ່ລັດຖະສະພາສະມາຊິກ APPF ສະເໜີຕໍ່ກອງປະຊຸມໃນຂົງເຂດຕ່າງໆເຊັ່ນ: ການເມືອງ ແລະ ຄວາມໝັ້ນຄົງ, ເສດຖະກິດ ແລະ ການຄ້າ, ການຮ່ວມມືໃນພາກພື້ນອາຊີ-ປາຊີຟິກ ແລະ ວຽກງານສະມາຊິກລັດຖະສະພາເພດຍິງ ເພື່ອເປັນການສົ່ງເສີມການທູດລັດຖະສະພາໃນການແກ້ໄຂບັນຫາ, ສົ່ງເສີມຄວາມໝັ້ນຄົງໃນພາກພື້ນ, ສົ່ງເສີມການທ່ອງທ່ຽວ ແລະ ຄວາມເຂົ້າອົກເຂົ້າໃຈຕໍ່ຄວາມຫລາກຫລາຍທາງດ້ານ

ອ່ານຕໍ່ໜ້າ 2

## ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ເຂົ້າຢ້ຽມຄຳນັບນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ



ໜ້າ 2

## ຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ (ຂົງເຂດຍຸຕິທຳ)

(ສພຊ) ເພື່ອຕິດຕາມກວດກາ ແລະ ຊຸກຍູ້ ການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ; ລົງເກັບກຳຂໍ້ມູນ, ຮັບຟັງຄຳຄິດຄຳເຫັນຂອງການນຳທ້ອງ

ອ່ານຕໍ່ໜ້າ 3




## ຕິດຕາມກວດກາການເຄື່ອນໄຫວວຽກງານການຂຸດຄົ້ນແຮ່ທາດ ທີ່ບໍລິສັດ ພູເບ້ຍມາຍນິ້ງ



(ສພຊ) ວັນທີ 24 ຕຸລາ 2022 ທ່ານ ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ປະສານສົມທົບກັບທ່ານ ແດງ ປະທຸມທອງ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18, ປະທານສະ

ອ່ານຕໍ່ໜ້າ 2

## ເຝິກອົບຮົມລະບຽບການເງິນຂອງລັດ ແລະ ອົງການຈັດຕັ້ງສາກົນ



ໜ້າ 3

## ກສຕສ ສຳເລັດການຕິດຕາມ ແລະ ຊຸກຍູ້ ວຽກງານການຜະລິດກະສິກຳ ຢູ່ 3 ແຂວງ

(ສພຊ) ລະຫວ່າງວັນທີ 13-21 ຕຸລາ 2022, ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ ວຽກງານການຜະລິດກະສິກຳ ຢູ່ 3 ແຂວງຄື: ນະຄອນຫລວງວຽງຈັນ, ວຽງຈັນ ແລະ ອຸດົມໄຊ.

ທັງນີ້, ເພື່ອຊຸກຍູ້ ຕິດຕາມການຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ສະບັບເລກທີ 55/ສພຊ, ລົງວັນທີ 8 ກໍລະກົດ

ອ່ານຕໍ່ໜ້າ 3

## ຮອງເລຂາທິການສະພາແຫ່ງຊາດ ເຮັດວຽກຮ່ວມກັບຄະນະເລຂາທິການ ສພຂ ຫົວພັນ




(ສພຊ) ວັນທີ 18 ຕຸລາຜ່ານມານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ, ທ່ານ ສົງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວ

ອ່ານຕໍ່ໜ້າ 3


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

## ປະທານ...

ວັດທະນະທຳ, ເພີ່ມທະວີການເຊື່ອມໂຍງ ແລະ ການສົ່ງເສີມເສດຖະກິດດິຈິຕອນ, ການຟື້ນຟູແບບຍືນຍົງພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19, ການສົ່ງເສີມຄວາມຫລາກຫລາຍທາງດ້ານຊີວະນາໆພັນ ແລະ ການນຳໃຊ້ພະລັງງານທົດແທນ, ການຍົກລະດັບການບໍລິການດ້ານສາທາລະນະສຸກ, ການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ແລະ ອື່ນໆ.

ໂອກາດດັ່ງກ່າວ, ໄດ້ມີການພົບປະສອງຝ່າຍ ລະຫວ່າງ ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ພະນະທ່ານ ຊວນ ຫລີກໄພ ປະທານລັດຖະສະພາ, ປະທານສະພາຜູ້ແທນຣາຊະດອນ ແຫ່ງ ລາຊະອານາຈັກໄທ ທີ່ສຳນັກງານລັດຖະສະພາໄທ. ໃນການພົບປະຄັ້ງນີ້, ປະທານລັດຖະສະພາໄທ ໄດ້ສະແດງການຕ້ອນຮັບຢ່າງອົບອຸ່ນ ຕໍ່ຄະນະຜູ້ແທນຂັ້ນສູງ ຂອງສະພາແຫ່ງຊາດລາວ; ສອງຝ່າຍຮ່ວມກັນຕີລາຄາຄືນສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປລາວ ແລະ ຣາຊະອານາຈັກໄທ ທີ່ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງຕະຫລອດມາ ຈົນໄດ້ຍົກລະດັບການພົວພັນຂຶ້ນເປັນຄູ່ຮ່ວມຍຸດທະສາດ ເພື່ອຄວາມຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ ໃນເດືອນມິຖຸນາຜ່ານມາ ໃນໂອກາດທີ່ພະນະທ່ານນາຍົກລັດຖະມົນຕີ ແຫ່ງ ສປປລາວ ຢ້ຽມຢາມ ຣາຊະອານາຈັກໄທ ຢ່າງເປັນທາງການ, ສອງຝ່າຍນັ້ນມີການແລກປ່ຽນການຢ້ຽມຢາມ ລະຫວ່າງ ການນຳຂັ້ນສູງຂອງສອງປະເທດ ຢ່າງເປັນປົກກະຕິ, ມີການຮ່ວມມືທາງດ້ານເສດຖະກິດ, ການຄ້າ-ການລົງທຶນ, ພະລັງງານ, ການພັດທະນາຊັບພະຍາກອນມະນຸດ, ສາທາລະນະສຸກ, ການທ່ອງທ່ຽວ, ການພັດທະນາພື້ນຖານໂຄງລ່າງ ໂດຍສະເພາະແມ່ນການເຊື່ອມຕໍ່ດ້ວຍການສ້າງຂົວຂ້າມແມ່ນ້ຳຂອງຫລາຍແຫ່ງ ແລະ ການພັດທະນາເສັ້ນທາງຄົມມະນາຄົມທາງບົກຈາກຝັ່ງໄທ ມາສູ່ຝັ່ງລາວ ເພື່ອເຊື່ອມຕໍ່ໃສ່ເສັ້ນທາງລົດໄຟລາວ-ຈີນ ອັນເປັນທ່າແຮງສຳຄັນ ໃນການຮ່ວມມືລະຫວ່າງສອງປະເທດພວກເຮົາ. ນອກນີ້, ຍັງໄດ້ສະໜັບສະໜູນ ແລະ ຊ່ວຍເຫລືອ ເຊິ່ງກັນແລະກັນ ໃນການຮັບມືກັບໄພພິບັດທາງທຳມະຊາດ, ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ການພົວພັນຮ່ວມມືໃນເວທີພາກພື້ນ ແລະ ສາກົນ.

ທັງສອງປະທານສະພາ ຍັງໄດ້ຮ່ວມກັນທົບທວນຄືນການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ ໃນໄລຍະຜ່ານມາ ເຫັນວ່າໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ ເຊິ່ງສະແດງອອກມີການແລກປ່ຽນຢ້ຽມຢາມ ຂອງຄະນະຜູ້ແທນລະດັບສູງ, ກຳມາທິການ, ຄະນະເລຂາທິການ, ຄະນະມິດຕະພາບລັດຖະສະພາ ແລະ ຂັ້ນຕ່າງໆ, ມີການແລກປ່ຽນຂໍ້ມູນ-ຂ່າວສານ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດນິຕິບັນຍັດ, ການຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ພາຍຫລັງການພົບປະສອງຝ່າຍ, ສອງປະທານສະພາ ໄດ້ຮ່ວມກັນລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ ເຊິ່ງໄດ້ກຳນົດແຜນການຮ່ວມມືນຳກັນໃນຕໍ່ໜ້າ.

ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ




ແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ມີການພົບປະສອງຝ່າຍກັບ ພະນະທ່ານ ພອນເພັດ ພິຊິດຊິນໄຊ ປະທານວຸດທິສະພາ ແຫ່ງ ຣາຊະອານາຈັກໄທ ດ້ວຍບັນຍາກາດອັນອົບອຸ່ນຖານບ້ານໃກ້ເຮືອນຄຽງ. ສອງຝ່າຍ ໄດ້ຕີລາຄາການພົວພັນຮ່ວມມື ລະຫວ່າງ ສອງປະເທດ, ສອງອົງການນິຕິບັນຍັດ ແລະ ການແຈ້ງສະພາບການຕ່າງໆ ໃຫ້ກັນຊາບ; ຝ່າຍລາວໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ລັດຖະສະພາໄທ ທີ່ປະສົບຜົນສຳເລັດໃນການເປັນເຈົ້າພາບຈັດກອງປະຊຸມ APPF ຢ່າງຈົບງາມ. ສອງຝ່າຍ ເປັນເອກະພາບວ່າຈະຮ່ວມກັນຊຸກຍູ້ໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງ ທີ່ໄດ້ຮ່ວມກັນລົງນາມ ໃຫ້ເປັນຮູບປະທຳ ແລະ ມີປະສິດຜົນ.

ໂອກາດຢ້ຽມຢາມຄັ້ງນີ້, ພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບພະກະນິດຖາທິຣາດເຈົ້າ ກົມສົມເດັດ ພະເທບ ພະຣັດຣາດສຸດາ ສະຫຍາມບໍຣົມມະຣາດຊະກຸມາຣີ ແຫ່ງ ຣາຊະອານາຈັກໄທ, ການຢ້ຽມຂໍ່ານັບເຕັມໄປດ້ວຍບັນຍາອັນອົບອຸ່ນສະໜິດສະໜົມ, ທ່ານປະທານສະພາແຫ່ງຊາດລາວ ສະແດງຄວາມຂອບໃຈທີ່ສົມເດັດ ພະເທບ ສະຫລະເວລາອັນມີຄ່າຕ້ອນຮັບ ແລະ ນຳເອົາຄວາມຢື້ຢາມຖາມຂ່າວຂອງພະນະທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປລາວ ເຖິງ ພະບາດສົມເດັດພະສີວະຣະເກົ້າເຈົ້າຢູ່ຫົວ, ພະຣາຊິນີ ແລະ ພະບໍຣົມວົງສານຸວົງ ແຫ່ງ ຣາຊະອານາຈັກໄທ ທຸກພະອົງ; ສອງຝ່າຍ ຍັງໄດ້ສົນທະນາກ່ຽວກັບຄວາມຄືບໜ້າຂອງໂຄງການພະຣາຊະດຳລິ ໂດຍສະເພາະສູນພັດທະນາ ແລະ ບໍລິການດ້ານການກະເສດ ຫ້ວຍຊອນ-ຫ້ວຍຊົ້ວ ແລະ ສູນອື່ນໆ ຢູ່ບັນດາແຂວງຕ່າງໆ ຂອງ ສປປລາວ ເຊິ່ງເປັນການຖ່າຍທອດບົດຮຽນຕົວຈິງໃຫ້ແກ່ປະຊາຊົນ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ; ພ້ອມນີ້, ທ່ານປະທານສະພາແຫ່ງຊາດ ໄດ້ສະແດງຄວາມຂອບໃຈຕໍ່ສົມເດັດ ພະເທບ ກໍຄື ຣາຊະອານາຈັກໄທ ທີ່ໄດ້ໃຫ້ການຊ່ວຍເຫລືອ ສປປລາວ ໃນໄລຍະຜ່ານມາ;

ພ້ອມດຽວກັນນັ້ນ, ທີ່ສຳນັກງານນາຍົກລັດຖະມົນຕີ ກຸງເທບມະຫານະຄອນ, ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຂົ້າຢ້ຽມຂໍ່ານັບພະນະທ່ານ ພົນເອກ ປຣະຍຸດ ຈັນໂອຊາ ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ. ການພົບປະດຳເນີນໄປດ້ວຍບັນຍາກາດອັນອົບອຸ່ນສະຖານບ້ານໃກ້ເຮືອນຄຽງ, ທ່ານປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຂອບໃຈທີ່ທ່ານນາຍົກລັດຖະມົນຕີ ໄດ້ສະຫລະເວລາຕ້ອນຮັບໃນຄັ້ງນີ້ ພ້ອມທັງແຈ້ງໃຫ້ຊາບຜົນການພົບປະກັບພະນະທ່ານ ຊວນ ຫລີກໄພປະທານລັດຖະສະພາໄທແລະພະນະທ່ານ ພອນເພັດ ວິຊິດຊິນໄຊ ປະທານວຸດທິສະພາ ເຊິ່ງສອງຝ່າຍພ້ອມກັນຕີລາຄາຄືນການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ ໃນໄລຍະຜ່ານມາ, ປຶກສາຫາລືທິດທາງການຮ່ວມມືໃນຕໍ່ໜ້າ ໂດຍໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ. ໃນການພົບປະສອງຝ່າຍຍັງໄດ້ປຶກສາຫາລື ບາງບັນຫາກ່ຽວກັບການພົວພັນຮ່ວມມືລະຫວ່າງ ສອງລັດຖະບານ ເປັນຕົ້ນການຮ່ວມມືດ້ານຄວາມໝັ້ນຄົງ, ດ້ານເສດຖະກິດ-ສັງຄົມ, ດ້ານພະລັງງານ, ດ້ານແຮງງານ ແລະ ອື່ນໆ.

ໃນໂອກາດເຂົ້າຮ່ວມກອງປະຊຸມໃຫຍ່ປະຈຳປີເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF) ໃນຄັ້ງນີ້, ທ່ານປະທານສະພາແຫ່ງຊາດລາວ ຍັງພົບປະເຮັດວຽກກັບ ສົມເດັດ ເຮັງ ຊຳຣິນ ປະທານສະພາແຫ່ງຊາດກຳປູເຈຍ, ທ່ານ ອັນເດລ ອີຢັດສະກິນ (Andrey Iatskin) ຮອງປະທານສະພາສູງ ແຫ່ງ ສະຫະພັນຣັດເຊຍ ເພື່ອປຶກສາຫາລືການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງສອງປະເທດ ກໍຄື ສອງອົງການນິຕິບັນຍັດ; ພ້ອມນັ້ນ, ທ່ານ ວູ ຮ່າຍ ຮ່າ ປະທານກຳມະທິການການຕ່າງປະເທດ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຍັງໄດ້ເຂົ້າຢ້ຽມຂໍ່ານັບທ່ານປະທານສະພາແຫ່ງຊາດລາວ ເພື່ອປຶກສາຫາລືວຽກງານອີກຈຳນວນໜຶ່ງ.

ນອກຈາກການພົບປະເຮັດວຽກເປັນທາງການແລ້ວ, ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດລາວ ໄດ້ໄປຢ້ຽມຢາມ ແລະ ທັດສະນະສຶກສາຢູ່ໂຮງງານຜະລິດອາຫານສຳເລັດຮູບອະກລີຟູດ ຈຳກັດ (ມະຫາຊົນ), ນິຄົມອຸດສາຫະກຳອຳມະຕະ ນະຄອນ, ໂຄງການປູກເຂົ້າ ແລະ ແປຮູບເປັນສິນຄ້າ ຂອງມູນນິທິໄຊພັດທະນາ ແລະ ການແປຮູບເປັນສິນຄ້າ ຂອງມະຫາວິທະຍາໄລມະຫິດົນສາລາຍາ ແລະ ພື້ນຖານທາງດ້ານວັດທະນະທຳຈຳນວນໜຶ່ງ.



## ພະນະທ່ານ...

(ສພຊ) ໃນວັນທີ 31 ຕຸລາ 2022, ທີ່ທຳນຽບລັດຖະບານ ກຸງເທບມະຫານະຄອນ, ຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ແຫ່ງ ສປປລາວ ນຳໂດຍພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ເຂົ້າຢ້ຽມພົບປະພະນະທ່ານ ພົນເອກ ປຣະຍຸດ ຈັນໂອຊາ ນາຍົກລັດຖະມົນຕີ ແຫ່ງ ຣາຊະອານາຈັກໄທ ໃນໂອກາດເຂົ້າຮ່ວມກອງປະຊຸມໃຫຍ່ປະຈຳປີເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF) ຄັ້ງທີ 30 ແລະ ສືບຕໍ່ຢ້ຽມຢາມຣາຊະອານາຈັກໄທ ຢ່າງເປັນທາງການ. ໃນການຢ້ຽມພົບປະຄັ້ງນີ້, ພະນະທ່ານປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມພາກພູມໃຈ ທີ່ໄດ້ພົບປະ ແລະ ປຶກສາຫາລື ກັບພະນະທ່ານນາຍົກລັດຖະມົນຕີໄທ ເພື່ອຊຸກຍູ້ການຮ່ວມມືລະຫວ່າງສອງປະເທດລາວ ແລະ ໄທ ແນໃສ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດ ລະຫວ່າງ ສອງປະເທດ ລາວ-ໄທ ກໍຄື ລະຫວ່າງ ສອງອົງການນິຕິບັນຍັດ ໃຫ້ນັບມື້ນັບຈະເລີນງອກງາມຂຶ້ນ.

ໃນໂອກາດນີ້, ພະນະທ່ານປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຊົມເຊີຍ ຕໍ່ຜົນສຳເລັດການເປັນເຈົ້າພາບຈັດກອງປະຊຸມ APPF ຄັ້ງທີ 30 ແລະ ຜົນສຳເລັດເຂົ້າຮ່ວມພິທີວາງສີລາລືກກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ 5 ລະຫວ່າງແຂວງບໍລິຄຳໄຊ-ບຶງການ ແລະ ໄດ້ແຈ້ງໃຫ້ຊາບຜົນການພົບປະກັບ ພະນະທ່ານ ຊວນ ຫລີກໄພ ປະທານລັດຖະສະພາໄທ ແລະ ພະນະທ່ານ ພອນເພັດ ວິຊິດຊິນໄຊ ປະທານວຸດທິສະພາ ເຊິ່ງໄດ້ຮ່ວມກັນທົບທວນຄືນການພົວພັນຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ ໃນໄລຍະຜ່ານມາ ແລະ ປຶກສາຫາລືທິດທາງການຮ່ວມມືໃນຕໍ່ໜ້າ. ພ້ອມນີ້, ກໍໄດ້ແຈ້ງໃຫ້ຊາບກ່ຽວກັບການລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ/ສະພາຜູ້ແທນຣາຊະດອນ ເຊິ່ງເປັນພື້ນຖານສຳຄັນໃຫ້ແກ່ການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດ.

ໃນຕອນທ້າຍ, ພະນະທ່ານນາຍົກລັດຖະມົນຕີໄທ ໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ແລະ ສອງຝ່າຍ ໄດ້ປຶກສາຫາລືການຊຸກຍູ້ການຮ່ວມມືໃນຫລາຍດ້ານ ໂດຍສະເພາະແມ່ນການຮ່ວມມືດ້ານຄວາມໝັ້ນຄົງ, ວຽກງານຊາຍແດນ, ການຮ່ວມມືດ້ານເສດຖະກິດ, ການຄ້າ, ການລົງທຶນ, ການເຊື່ອມໂຍງເຊື່ອມຈອດ, ດ້ານພະລັງງານ, ວຽກງານແຮງງານ ແລະ ບັນຫາອື່ນໆ. ການຢ້ຽມພົບປະໃນຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ.

## ຕິດຕາມ...

ພາປະຊາຊົນແຂວງໄຊສົມບູນ ໄດ້ເຄື່ອນໄຫວຕິດຕາມກວດກາວຽກງານການຂຸດຄົ້ນແຮ່ທາດ ທີ່ບໍລິສັດພູເບ້ຍມາຍນິງ ບ້ານນ້ຳໂມ້ ເມືອງອະນຸວົງ ແຂວງໄຊສົມບູນ ໂດຍການຕ້ອນຮັບຂອງທ່ານ ສະຕີບ ຈິມໂປ ຜູ້ອຳນວຍການບໍລິສັດ ພູເບ້ຍມາຍນິ້ງ ພ້ອມດ້ວຍຄະນະ ເຂົ້າຮ່ວມ.

ໃນໂອກາດນີ້, ໄດ້ຮັບຟັງການລາຍງານການເຄື່ອນໄຫວ ແລະ ການຈັດຕັ້ງປະຕິບັດວຽກງານການຂຸດຄົ້ນແຮ່ທາດ ຂອງບໍລິສັດ ພູເບ້ຍມານິ້ງ ໂດຍທ່ານ ນາງ ມະນີລັດ ອາຣຸນລັງສີ ຜູ້ຈັດການອາວຸໂສຝ່າຍພົວພັນພາຍນອກ ແລະ ທ່ານ ນາງ ວັນນະລີ ພູນສະຫວັດ ຜູ້ຈັດງານຝ່າຍປະສານງານລັດຖະບານ ໂດຍໄດ້ໃຫ້ຮູ້ວ່າ: ບໍລິສັດ ພູເບ້ຍມານິ້ງ ໄດ້ເລີ່ມເປີດຂຶ້ນໃນປີ ຄສ.1994 ແລະ ໄດ້ດຳເນີນຈັດຕັ້ງປະຕິບັດມາຮອດປັດຈຸບັນ ເຊິ່ງບໍລິສັດໄດ້ປະກອບສ່ວນຫລາຍກວ່າ 925 ລ້ານໂດລາ ໃຫ້ແກ່ລັດຖະບານລາວ ໂດຍຊັບສິນໃນການຜະລິດຂອງບໍລິສັດ ແພນອອສ ໃນລາວ ມີໂຮງງານຂຸດຄົ້ນ-ປຸງແຕ່ງ ທອງຄຳ (ພູຄຳ) ແລະ ໂຮງງານຂຸດຄົ້ນປຸງແຕ່ງຄຳ-ເງິນ ບ້ານຫ້ວຍຊາຍ; ທັງສອງໂຮງງານແມ່ນດຳເນີນງານໂດຍບໍລິສັດ ພູເບ້ຍມາຍນິ້ງ ໂຮງງານພູຄຳ ແລະ ບ້ານຫ້ວຍຊາຍ ຕັ້ງຢູ່ໃນເຂດສຳປະທານພູເບ້ຍຂອງບໍລິສັດ 2.600 ກິໂລຕາແມັດ; ໂຄງການນີ້ປະກອບມີບໍ່ຂຸດຄົ້ນເທິງໜ້າດິນ ເຊິ່ງຈະປ້ອນແຮ່ເຂົ້າໂຮງງານຜະລິດ-ປຸງແຕ່ງ ເພື່ອສະກັດເອົາໂລຫະທອງ ແລະ ວັດຖຸມີຄ່າ ໂດຍນຳໃຊ້ເຕັກນິກການສະກັດແຮ່ ແບບລະບົບຟູລອຍແຮ່ ໃຫ້ກາຍເປັນຜະລິດຕະພັນແຮ່ທອງເຂັ້ມຂຸ້ນ ເພື່ອສົ່ງອອກຈຳໜ່າຍ; ພ້ອມນັ້ນ, ຍັງໄດ້ມີການພັດທະນາຊຸມຊົນຊ່ວຍເຫລືພໍ່ແມ່ປະຊາຊົນທີ່ຢູ່ໃນເຂດບໍລິເວນ ໄດ້ມີວຽກເຮັດງານທຳ ແລະ ບໍລິສັດຍັງໄດ້ລົງທຶນຫລາຍກວ່າ 4.5 ລ້ານໂດລາ ເຂົ້າແຜນການພັດທະນາ ຊຸມຊົນຢູ່ລາວ ແລະ ລົງທຶນຫລາຍກວ່າ 1 ລ້ານໂດລາ ເຂົ້າໃນການກໍ່ສ້າງເສັ້ນທາງເບຕົງ ບ້ານນ້ຳໂມ້; ແຜນພັດທະນາຊຸມຊົນ ສຸມໃສ່ພື້ນຖານໂຄງລ່າງ, ສາທາລະນະສຸກ, ສຸຂະອະນາໄມ, ການສຶກສາ, ການພັດທະນາກະສິກຳ, ການພັດທະນາທຸລະກິດຂະໜາດນ້ອຍ ແລະ ການເງິນຈຸລະພາກ; ລາຍຮັບຫລາຍກວ່າ 9.1 ລ້ານໂດລາ ທີ່ສ້າງໃຫ້ຊຸມຊົນທ້ອງຖິ່ນ ໂດຍຜ່ານການຈັດຊື້ຜົນລະປູກປອດສານພິດຈາກພໍ່ແມ່ປະຊາຊົນ ເຂົ້າສູ່ບໍລິສັດ.

ພາຍຫລັງຮັບຟັງການລາຍງານຂອງບໍລິສັດດັ່ງກ່າວແລ້ວ, ທ່ານ ລີເບີ ລີບົວປາວ ຍັງໄດ້ສະແດງຄວາມຊົມເຊີຍ ຕໍ່ບໍລິສັດດັ່ງກ່າວ ທີ່ໄດ້ປະກອບສ່ວນໃຫ້ແກ່ລັດຖະບານລາວ ແລະ ສົມທົບທຶນຊ່ວຍເຫລືອພໍ່ແມ່ປະຊາຊົນບັນດາເຜົ່າ ທີ່ຢູ່ໃນເຂດບໍລິເວນດັ່ງກ່າວ; ພ້ອມນັ້ນ, ທ່ານຍັງໄດ້ມີຄຳສະເໜີຕໍ່ບໍລິສັດ ພູເບ້ຍມາຍນິ້ງ ໃນການເຄື່ອນໄຫວວຽກງານຂອງຕົນໃຫ້ມີຄວາມເປັນລະບຽບຮຽບຮ້ອຍຕາມຫລັກການ ພ້ອມທັງປັບປຸງເສັ້ນທາງໃຫ້ມີຄວາມສະດວກໃນການນຳໃຊ້ເສັ້ນທາງແຂວງໄຊສົມບູນ ເພື່ອໃຫ້ສອງຝ່າຍອຳນວຍຄວາມສະດວກສະບາຍ ໃຫ້ກັນ ແລະກັນ ໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.

(ນາງ ອຳໄພພອນ ແກ້ວວິໄລ)



## ຕິດຕາມ...

ຖິ່ນ ແລະ ຄຳເຫັນຂອງປະຊາຊົນຕໍ່ບັນຫາທີ່ພົ້ນເດັ່ນໃນຂົງເຂດຍຸຕິທຳ ໂດຍສະເພາະບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ສະຫລຸບຕີລາຄາການຈັດຕັ້ງປະຕິບັດ 4 ກົດໝາຍ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາ ແລະ ຮັບຮອງ; ສະຫລຸບຖອດຖອນບົດຮຽນໃຫ້ແກ່ການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຕ່າງໆໃນຕໍ່ໜ້າ ແລະ ທົດລອງນຳໃຊ້ຮ່າງຄູ່ມືການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ; ໃນວັນທີ 31 ຕຸລາ-1 ພະຈິກ 2022 ທີ່ຫ້ອງປະຊຸມຂອງເມືອງວັງວຽງ ແຂວງວຽງຈັນ, ກຳມາທິການຍຸຕິທຳສະພາແຫ່ງຊາດ ໄດ້ຈັດກອງປະຊຸມການຈັດຕັ້ງປະຕິບັດນຳໃຊ້ປຶ້ມຄູ່ມື ໃນການຕິດຕາມກວດກາການປະເມີນການຈັດຕັ້ງປະຕິບັດກົດໝາຍ (ຂົງເຂດຍຸຕິທຳ 4 ສະບັບ) ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳວຽກງານຂົງເຂດຍຸຕິທຳ; ມີປະທານ-ຮອງປະທານກຳມາທິການຍຸຕິທຳ, ຮອງປະທານກຳມາທິການກົດໝາຍ, ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານສານປະຊາຊົນສູງສຸດ, ຮອງປະທານສານປະຊາຊົນພາກກາງ, ຮອງປະທານສານທະຫານຂັ້ນສູງ; ຕາງໜ້າຈາກກະຊວງຍຸຕິທຳ, ອົງການກວດກາລັດ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ອົງການໄອຍະການປະຊາຊົນພາກກາງ; ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໃນຄັ້ງນີ້, ໄດ້ຮັບຟັງການສະເໜີບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບຜົນການປະເມີນກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຈາກທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ; ສະເໜີບົດລາຍງານ ຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບຜົນການປະເມີນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຈາກທ່ານ ຄຳເຜີດ ສິມວໍລະຈິດ ຮອງຫົວໜ້າອົງການປະຊາຊົນສູງສຸດ; ຈາກນັ້ນ, ປະທານກອງປະຊຸມມີຄຳຖາມເຈາະຈີ້ມ ເພື່ອໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳຄິດຄຳເຫັນໃສ່ບັນດາບົດລາຍງານດັ່ງກ່າວ; ພ້ອມນັ້ນ, ກອງປະຊຸມໄດ້ຮັບຟັງການຊີ້ແຈງຈາກພາກສ່ວນທີ່ກ່ຽວຂ້ອງຕື່ມອີກ.

ໂອກາດນີ້, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ເພື່ອຕິດຕາມກວດກາ ແລະ ຊຸກຍູ້ ການປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ໂດຍສະເພາະແມ່ນກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ; ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ທັງເປັນການເກັບກຳຂໍ້ມູນ, ຟັງຄຳຄິດຄຳເຫັນ ຕໍ່ບັນຫາທີ່ພົ້ນເດັ່ນໃນຂົງເຂດຍຸຕິທຳ ເປັນຕົ້ນບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ພ້ອມກັນນີ້, ກໍເພື່ອເປັນການສະຫລຸບຕີລາຄາ, ດ້ານດີ, ຂໍ້ຄົງຄ້າງ, ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບດັ່ງກ່າວ ເພື່ອເປັນຂໍ້ມູນລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍປີ 2022 ນີ້ ແລະ ທົດລອງນຳໃຊ້ຮ່າງຄູ່ມືການຕິດຕາມກວດກາ ການປະເມີນການຈັດຕັ້ງປະຕິບັດກົດໝາຍ ເຊິ່ງບັນດາເອກະສານທີ່ທາງກອງປະຊຸມໄດ້ຍົກຂຶ້ນມານຳສະເໜີຄັ້ງນີ້ ເຫັນວ່າເປັນເອກະສານທີ່ສຳຄັນ ແລະຕ້ອງໄດ້ຮີບຮ້ອນສຸມໃສ່ຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ ແລ້ວລາຍງານຂໍທິດຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ເພື່ອນຳມາເປັນບ່ອນອີງໃນການຕິດຕາມ ກວດກາ ການປະເມີນການຈັດຕັ້ງປະຕິບັດບັນດາກົດໝາຍອື່ນ ໃນແຕ່ລະຂົງເຂດໃນຕໍ່ໜ້າ ທັງເປັນຂໍ້ມູນສຳຄັນໃຫ້ແກ່ການກະກຽມບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບວຽກງານດັ່ງກ່າວ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ຈົ່ງຍົກສູງຄວາມຮັບຜິດຊອບໜ້າທີ່ຂອງຕົນ ຕັ້ງໃຈຮັບຟັງ ແລະ ສຸມທຸກສະຕິປັນຍາ ເພື່ອຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາເຂົ້າໃສ່ເນື້ອໃນຕ່າງໆ ທີ່ກ່າວມາຂ້າງເທິງນັ້ນ ເພື່ອປັບປຸງເຮັດໃຫ້ມີເນື້ອໃນສົມບູນ, ຄົບຖ້ວນ, ສອດຄ່ອງກັບສະພາບຕົວຈິງ ແລະ ພາວະວິໄສ.

ກອງປະຊຸມ, ໄດ້ຮັບການສະໜັບສະໜູນດ້ານງົບປະມານຈາກມູນນິທິເວສມິນສະເຕີ ເພື່ອປະຊາທິປະໄຕ (WFD) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ສຸພາວັນ ທອມສະນິດ)



## ເຝິກອົບຮົມ...

(ສພຊ) ໃນລະຫວ່າງວັນທີ 27-28 ຕຸລາ 2022 ທີ່ເມືອງວັງວຽງ ແຂວງວຽງຈັນ, ກົມການເງິນ ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຝິກອົບຮົມກ່ຽວກັບລະບຽບການເງິນຂອງລັດ ແລະ ອົງການຈັດຕັ້ງສາກົນ ທີ່ເປັນຄູ່ຮ່ວມງານຂອງສະພາແຫ່ງຊາດ ໃຫ້ແກ່ຜູ້ປະສານງານໂຄງການສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ເຂົ້າຮ່ວມມີຮອງຄະນະເລຂາທິການສະພາແຫ່ງຊາດ ຜູ້ຊີ້ນຳໂຄງການ ແລະ ຜູ້ປະສານງານຂອງສະພາປະຊາຊົນຂັ້ນແຂວງ 18 ແຂວງ ທົ່ວປະເທດ, ຕາງໜ້າຈາກອົງການຈັດຕັ້ງສາກົນ GIZ (CEGGA), UNDP, TAF, HELVETAS, WFD, ບັນດາແຂກຖືກເຊີນ, ວິຊາການທີ່ກ່ຽວຂ້ອງ ແລະ ພາຍໃນກົມການເງິນ ຄະນະເລຂາທິການສະພາແຫ່ງຊາດ.

ທັງນີ້, ເພື່ອຜັນຂະຫຍາຍບັນດານິຕິກຳ ແລະ ລະບຽບການຄຸ້ມຄອງການເງິນຂອງລັດ ແລະ ງົບປະມານຊ່ວຍເຫລືອລ້າຈາກອົງການຈັດຕັ້ງສາກົນ ໃຫ້ຄະນະກົມພາຍໃນສະພາແຫ່ງຊາດ ຮັບຮູ້ ແລະ ເຂົ້າໃຈຫລາຍຂຶ້ນກວ່າເກົ່າ; ເພື່ອຮັບປະກັນການສ້າງແຜນການເຄື່ອນໄຫວວຽກງານປະຈຳປີ, ແຜນກິດຈະກຳລະອຽດ ທີ່ກ່ຽວພັນເຖິງການສ້າງແຜນງົບປະມານປະຈຳປີ, ແຜນງົບປະມານກິດຈະກຳ ໃຫ້ຖືກຕ້ອງ, ທັນເວລາ ແລະ ມີຄວາມເຂົ້າໃຈທີ່ຖືກຕ້ອງຕໍ່ລະບຽບຫລັກການ; ເພື່ອປັບປຸງຂອດການປະສານງານລະຫວ່າງສະພາແຫ່ງຊາດ ກັບສະພາປະຊາຊົນຂັ້ນແຂວງ ແລະ ການນຳໃຊ້ງົບປະມານຂອງລັດ ແລະ ງົບປະມານຈາກອົງການຈັດຕັ້ງສາກົນ ໃຫ້ມີຄວາມສະດວກວ່ອງໄວ, ຖືກຕ້ອງຕາມແຜນການ, ຕາມລະບຽບຫລັກການ, ເປັນລະບຽບ, ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງຂຶ້ນກວ່າເກົ່າ.

ໃນກອງປະຊຸມ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ການຈັດຊຸດເຝິກອົບຮົມຄັ້ງນີ້ ມີຄວາມໝາຍສຳຄັນຫລາຍ ເຊິ່ງຈະໄດ້ພ້ອມກັນຮັບຟັງການສະເໜີບັນດາຫົວຂໍ້ ຄື: 1) ເຜີຍແຜ່ແຈ້ງການການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດ ງວດ IV ປີ 2022 ສະບັບເລກທີ 2613/ກງ, ລົງວັນທີ 29 ສິງຫາ 2021 ແລະ ດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022; 2) ມະຕິປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022; 3) ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການນຳໃຊ້ງົບປະມານແຫ່ງລັດເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການພາຍໃນຂອງສະພາແຫ່ງຊາດ; 4) ຂັ້ນຕອນການປະສານງານພາຍໃນສະພາແຫ່ງຊາດ, ການປະສານງານກັບຜູ້ໃຫ້ທຶນ ແລະ ການປະກອບເອກະສານ; 5) ວິທີການສ້າງແຜນກິດຈະກຳ, ວາລະ, ການກຳນົດເນື້ອໃນເອກະສານແຈ້ງເຊີນຜູ້ເຂົ້າຮ່ວມ ແລະ ການຂຽນບົດລາຍງານກອງປະຊຸມ ທີ່ນຳໃຊ້ງົບປະມານຊ່ວຍເຫລືອລ້າຈາກອົງການຈັດຕັ້ງສາກົນ; 6) ການປະຕິບັດຕາມລະບຽບການເງິນ ແລະ ລະບຽບການວ່າດ້ວຍການເບີກຈ່າຍງົບປະມານ ທີ່ອົງການຈັດຕັ້ງສາກົນເປັນພາກສ່ວນຈັດຕັ້ງປະຕິບັດ/ຄຸ້ມຄອງງົບປະມານໂດຍກົງ; 7) ການສ້າງແຜນງົບປະມານ, ການລາຍງານ ແລະ ເອກະສານປະກອບລາຍງານ ທີ່ນຳໃຊ້ງົບປະມານຂອງອົງການຈັດຕັ້ງສາກົນ ແລະ 8. ພາລະບົດບາດ ແລະ ໜ້າທີ່ຂອງພະແນກຄຸ້ມຄອງແຫລ່ງທຶນຊ່ວຍເຫລືອລ້າ ຮ່ວມກັບຄູ່ຮ່ວມພັດທະນາ ກ່ຽວກັບການສະໜັບສະໜູນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ. ທັງ 8 ຫົວຂໍ້ທີ່ນຳມາສະເໜີໃນຄັ້ງນີ້ ແມ່ນມີຄວາມສຳຄັນຫລາຍເພາະຕິດພັນກັບການປະຕິບັດໜ້າທີ່ການເປັນເສນາທິການໃນການຄົ້ນຄວ້າ, ການສ້າງແຜນງົບປະມານ ແລະ ການນຳໃຊ້ງົບປະມານ ທັງຈາກລັດ ແລະ ຈາກອົງການຈັດຕັ້ງສາກົນ ເຊິ່ງຕິດພັນກັບການຂຶ້ນແຜນວຽກ, ແຜນຄົນ, ແຜນເງິນ ແລະ ການລະບຸໜ້າທີ່ຄວາມຮັບຜິດຊອບ ໃນການລົງເຄື່ອນໄຫວວຽກງານຕາມພາລະບົດບາດ, ການຈັດກອງປະຊຸມສຳມະນາ, ກອງປະຊຸມທາບທາມ, ການລົງພົບປະ, ກອງປະຊຸມກະກຽມ ແລະ ກອງປະຊຸມເຝິກອົບຮົມຕ່າງໆ ໃຫ້ບັນດາກົງຈັກທີ່ຕົນສັງກັດຢູ່ໃຫ້ສອດຄ່ອງກັບລະບຽບການທີ່ໄດ້ກຳນົດໄວ້ ພ້ອມທັງເຮັດໃຫ້ບັນດານັກເຝິກອົບຮົມມີຄວາມເຂົ້າໃຈທີ່ເລິກເຊິ່ງກວ່າເກົ່າ ກ່ຽວກັບການປະຕິບັດລະບຽບຫລັກການດ້ານການເງິນ, ການນຳໃຊ້ງົບປະມານຂອງລັດ ແລະ ຂອງອົງການຈັດຕັ້ງສາກົນ ເພື່ອໃຫ້ນຳໄປຈັດຕັ້ງປະຕິບັດຢ່າງເປັນເອກະພາບ ທັງຮັບປະກັນການປະຕິບັດຕາມລະບຽບການຢ່າງເຂັ້ມງວດ. ໃນນາມປະທານກອງປະຊຸມ ຂໍຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມເຝິກອົບຮົມຄັ້ງນີ້ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບຂອງຕົນ ເຂົ້າໃນການສຶກສາອົບຮົມ ແລະ ເພື່ອນຳມາແລກປ່ຽນບົດຮຽນປະສົບການຮ່ວມກັນ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ-CEGGA)

(ອານຸສອນ ພູມມີທອນ)

## ກສຕສ...

2022 ແລະ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ນິຕິກຳ ກ່ຽວກັບການຊຸກຍູ້ສົ່ງເສີມການຜະລິດອາຫານສັດ, ຝຸ່ນ ແລະ ການຜະລິດເຂົ້າ ເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າທົດແທນການນຳເຂົ້າ ແລະ ການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ.

ໃນການເຄື່ອນໄຫວຄັ້ງນີ້, ຄະນະໄດ້ເຮັດວຽກຮ່ວມກັບສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ, ສະມາຊິກສະພາປະຊາຊົນແຂວງວຽງຈັນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ເຊິ່ງໄດ້ຈັດກອງປະຊຸມຮ່ວມ ເພື່ອຮັບຟັງການລາຍງານຈາກຜູ້ປະກອບການຜະລິດກະສິກຳຕ່າງໆ ຢູ່ນະຄອນຫລວງວຽງຈັນ ແລະ ແຂວງວຽງຈັນ ພ້ອມທັງເຄື່ອນໄຫວຢ້ຽມຢາມໂຮງງານຜະລິດອາຫານສັດຄວາມຫວັງໃໝ່, ໂຮງງານຜະລິດອາຫານສັດ ກຣີນຟີດ ແລະ ໂຮງງານຜະລິດປຸ໋ຍອິນຊີ ຊີວະພາບ ຂອງບໍລິສັດ ເອເຊຍ ກະເສດອິນຊີ ຈຳກັດ.

ພ້ອມດຽວກັນນີ້, ຄະນະຍັງໄດ້ສືບຕໍ່ເຄື່ອນໄຫວເຮັດວຽກຮ່ວມກັບສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ໂດຍການຕ້ອນຮັບ ແລະ ເປັນປະທານຮ່ວມຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງອຸດົມໄຊ ເພື່ອຮັບຟັງການລາຍງານຈາກພະແນກການກ່ຽວຂ້ອງ ແລະ ຜູ້ປະກອບການພາຍໃນແຂວງອຸດົມໄຊ ກ່ຽວກັບສະພາບການຜະລິດກະສິກຳ ແລະ ບັນຫາອື່ນໆ ພ້ອມທັງເຄື່ອນໄຫວຢ້ຽມຢາມພື້ນຖານການຜະລິດຈຳນວນໜຶ່ງ ເປັນຕົ້ນການປູກຜັກເຮືອນຮົ່ມ ຂອງກຸ່ມຜະລິດຜັກເປັນສິນຄ້າ ຢູ່ບ້ານຫລັກ 10, ໂຮງງານອົບສາລີ ຢູ່ບ້ານບໍ່, ຟາມລ້ຽງໝູ, ຟາມລ້ຽງເປັດ ແລະ ໄກ່ພັນໄຂ່ ແລະສູນສົ່ງເສີມເຕັກນິກກະສິກຳ ແລະ ປ່າໄມ້ ນ້ຳທົບ.

ໃນໂອກາດດັ່ງກ່າວ, ຄະນະໄດ້ເຂົ້າພົບທ່ານ ສົມຈິດ ປັນຍາສັກ ຮອງເຈົ້າແຂວງອຸດົມໄຊ ເພື່ອລາຍງານແລະປຶກສາຫາລືກ່ຽວກັບສະພາບການຜະລິດກະສິກຳ ພາຍໃນແຂວງ ແລະ ສະເໜີບາງບັນຫາເພື່ອແກ້ໄຂໃນຕໍ່ໜ້າ.

(ນັກຂ່າວ: ກສຕສ)



## ຮອງເລຂາ...

ຂ້ອງ ຈາກສະພາແຫ່ງຊາດ ໄດ້ເຮັດວຽກຮ່ວມກັບຄະນະເລຂາທິການສະພາປະຊາຊົນແຂວງຫົວພັນ ເພື່ອຕິດຕາມກວດກາ ແລະ ຊຸກຍູ້ວຽກງານລະຫວ່າງຄະນະເລຂາທິການສະພາແຫ່ງຊາດ ແລະ ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ.

ໃນການເຄື່ອນໄຫວເຮັດວຽກຄັ້ງນີ້, ທ່ານ ນາງ ພອນສີ ໄຊຍະບຸນ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຕ່າງໆ ທີ່ຂຶ້ນກັບຄະນະເລຂາທິການ ເປັນຕົ້ນແມ່ນວຽກງານເລຂານຸການ-ການນຳ, ວຽກຈັດຕັ້ງ-ພະນັກງານ, ວຽກງານກວດກາ, ວຽກງານຄຸ້ມຄອງຫ້ອງການ, ວຽກງານບໍລິຫານ-ພິທີການ, ວຽກງານການເງິນ ແລະ ວຽກງານສື່ມວນຊົນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ແລະ ສະເໜີຂອງແຕ່ລະໜ້າວຽກ ເພື່ອພ້ອມກັນຄົ້ນຄວ້າ ແລະ ເປັນຂໍ້ມູນສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ມີທິດປັບປຸງ, ແກ້ໄຂໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຂອງທ້ອງຖິ່ນໃນຕໍ່ໜ້າ.

(ເວີນທອງ ແກ້ວບຸນມີ)

# ຊຸກຍູ້ວຽກງານຂົງເຂດໂຍທາທິການ ແລະ ຂົນສົ່ງ ຢູ່ນະຄອນຫລວງວຽງຈັນ



(ສພຊ) ເພື່ອເປັນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕາມມະຕິທີ່ສະພາປະຊາຊົນນະຄອນຫລວງວຽງຈັນ ໄດ້ຮັບຮອງເອົາໃນກອງປະຊຸມ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃນໄລຍະ 9 ເດືອນຕົ້ນປີ, ແຜນວຽກຈຸດສຸມ 3 ເດືອນທ້າຍປີ 2022.

ໃນຕອນເຊົ້າຂອງວັນທີ 28 ຕຸລາ 2022 ທ່ານ ສົມບັດ ຈັນທະມາດ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ຢູ່ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫລວງວຽງຈັນ (ນວ) ໂດຍການຕ້ອນຮັບຂອງທ່ານ ສຸລິວັນ ພົມມະຫາໄຊ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນວ ພ້ອມດ້ວຍຄະນະ.

ໃນກອງປະຊຸມ, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຂອງພະແນກໂຍທາທິການ ແລະ ຂົນສົ່ງ ເຊິ່ງໄລຍະຜ່ານມາໄດ້ເອົາໃຈໃສ່ຕິດຕາມກວດກາການເຄື່ອນໄຫວຮອບດ້ານຂອງບັນດາຂະແໜງ, ຕິດຕາມກວດກາການປະມູນຈັດຊື້-ຈັດຈ້າງໂຄງການກໍ່ສ້າງ ແລະ ສ້ອມແປງທີ່ຂຶ້ນກັບພະແນກ ໃນນັ້ນ, ໄດ້ສ້ອມແປງບັນດາເສັ້ນທາງຫລວງແຫ່ງຊາດຂອບເຂດ ນວ ຈຳນວນ 4 ເສັ້ນທາງ ມີລວງຍາວທັງໝົດ 159,3 ກິໂລແມັດ, ລວມມູນຄ່າ 19,50 ຕື້ກີບ ສຳເລັດ 100% ແລະ ສ້ອມແປງ, ບູລະນະເສັ້ນທາງໃນ ນວ ດ້ວຍການຕາບຂຸມດ້ວຍຢາງຂື້ວ ມີເນື້ອທີ່ທັງໝົດ 3,042 ແມັດ ນຳໃຊ້ຢາງຂື້ວ ຈຳນວນ 5,470 ເປົາ, ຖົມຂຸມໃຫຍ່ດ້ວຍດິນດີ 254,5 ມ$^3$, ຕິດຕັ້ງຝາຕະແກງຂຸມຮັບນ້ຳໜ້າທາງ 38 ອັນ, ຕິດຕັ້ງຝາຂຸມພັກນ້ຳ (Manhole) ຈຳນວນ 22 ອັນ ແລະ ຕິດຕັ້ງຝາເບຕົງຮ່ອງນ້ຳ 9 ອັນ, ຢາຮອຍແຕກແຫງຕາມໜ້າທາງໂດຍນຳໃຊ້ຢາງນ້ຳ GRS2 ຈຳນວນ 10 ຟຸ້ຍ ເພື່ອໃຫ້ພື້ນຜິວການສັນຈອນໄດ້ຮັບການປົວແປງ ແລະ ສາມາດໄປມາໄດ້ສະດວກ, ຈັດຕັ້ງປະຕິບັດໄກ່ເກ່ຍຕາມແລວທາງລົດໄຟທີ່ຜ່ານ 4 ເມືອງຂອງ ນວ ມີລວງຍາວ 59,6 ກິໂລແມັດ ມີຕອນດິນທີ່ຖືກຜົນກະທົບ ທັງໝົດ 1.523 ຕອນ ປັດຈຸບັນປະຕິບັດສຳເລັດ 100%. ຄຽງຄູ່ກັນນັ້ນ, ໄດ້ປະສານສົມທົບກັບບັນດາຂະແໜງການ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເພື່ອຂຶ້ນແຜນງົບປະມານ ເຊິ່ງໃນປີ 2022 ການຊຳລະໜີ້ສິນໂຄງການກໍ່ສ້າງພື້ນຖານ ສາມາດປະຕິບັດບັດໄດ້ ຄື: ບ້ວງລົງທຶນປົກກະຕິ (ໂຄງການສືບຕໍ່) 51 ໂຄງການ ປະຕິບັດໄດ້ 51,16%, ບ້ວງເປົ້າໝາຍສະເພາະ 8 ໂຄງການ ປະຕິບັດໄດ້ 29,03%, ບ້ວງຟື້ນຟູໄພພິບັດ 3 ໂຄງການ ປະຕິບັດໄດ້ 99,96%, ບ້ວງສົມທົບທຶນກັບໂຄງການເງິນກູ້ (ODA) 4 ໂຄງການ ປະຕິບັດໄດ້ 83,33%, ບ້ວງຈົດຮັບຈົດຈ່າຍ 4 ໂຄງການ ປະຕິບັດໄດ້ 93,59% ແລະ ຊ່ວງຊຳລະໜີ້ສູນ 49 ໂຄງການ ປະຕິບັດໄດ້ 99,42%; ນອກນັ້ນ, ຍັງໄດ້ສຳເລັດການຈັດຕັ້ງປະຕິບັດບັນດາໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ຈຳນວນ 2 ໂຄງການ ມີຄວາມຍາວ 810 ແມັດ. ປັດຈຸບັນສືບຕໍ່ກໍ່ສ້າງ 3 ໂຄງການຄື: ໂຄງການປ້ອງກັນຕະຝັ່ງເຈື່ອນດອນຊິງຊູ ເມືອງສີໂຄດຕະບອງ, ຄວາມຍາວ 5,760 ແມັດ ປະຕິບັດໄດ້ 85,63%; ໂຄງການປ້ອງກັນຕະຝັ່ງເຈື່ອນ ບ້ານທ້ອມ ເມືອງຫາດຊາຍຟອງ, ຄວາມຍາວ 1,540 ແມັດ ປະຕິບັດໄດ້ 76,7% ແລະ ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ບ້ານຫ້ວຍຫາງ ເມືອງສັງທອງ, ຄວາມຍາວ 1,760 ແມັດ ປະຕິບັດໄດ້ 40%.

ຕອນທ້າຍກອງປະຊຸມ, ຄະນະຈາກສະພາປະຊາຊົນນະຄອນຫລວງວຽງຈັນ ກໍໄດ້ມີຄຳເຫັນແລກປ່ຽນ ແລະ ຮັບເອົາບາງບັນຫາ, ຂໍ້ຫຍຸ້ງຍາກຂອງຄະນະຮັບຜິດຊອບໃນຂະແໜງການຕ່າງໆເພື່ອນຳສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະແນກໂຍທາທິການ ແລະ ຂົນສົ່ງດັ່ງກ່າວ ທີ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍ ແລະ ທິດທາງໃນຕໍ່ໜ້າທີ່ກຳນົດໄວ້ໃຫ້ບັນລຸຄາດໝາຍ.

(ນັກຂ່າວ ສປນວ)

# ຍົກລະດັບຂີດຄວາມສາມາດດ້ານວຽກງານໄອທີ



(ສພຊ) ໃນຕອນເຊົ້າວັນທີ 27 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດເຝິກອົບຮົມວຽກງານໄອທີກ່ຽວກັບການນຳໃຊ້ອຸປະກອນສະມາດບ໊ອດ ແລະ ການນຳໃຊ້ໂປແກຣມຄວບຄຸມ, ຕິດຕາມກອງປະຊຸມທາງໄກ ໂດຍການເປັນປະທານຂອງທ່ານ ຂັນທອງ ຄົມທິລາດ ຮອງເລຂາທິການສະພາປະຊາຊົນແຂວງ, ມີບັນດາທ່ານຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການຈຳນວນໜຶ່ງຈາກ 10 ຂະແໜງພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນການຈັດເຝິກອົບຮົມຄັ້ງນີ້, ກໍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນທີ່ເປັນເສນາທິການຊ່ວຍວຽກຂອງສະພາປະຊາຊົນແຂວງສະຫວັນນະເຂດ ເປັນການຍົກລະດັບຄວາມຮູ້, ຄວາມສາມດໃນວຽກງານໄອທີ ໃຫ້ເລິກເຊິ່ງຂຶ້ນກວ່າເກົ່າ ເຊິ່ງໃນກອງປະຊຸມແມ່ນໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍເນື້ອໃນເອກະສານຈາກນັກວິທະຍາກອນທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການຕົວຈິງ ຈາກສະພາປະຊາຊົນແຂວງ ເປັນຕົ້ນແມ່ນການນຳໃຊ້ໂປແກຣມຄວບຄຸມກອງປະຊຸມທາງໄກ ເຊິ່ງຜູ້ເຂົ້າຮ່ວມແມ່ນໄດ້ມີການປະຕິບັດຕົວຈິງ ແລະ ສາມາດນຳເອົາບົດຮຽນທີ່ໄດ້ໃນຄັ້ງນີ້ ໄປໝູນໃຊ້ເຂົ້າໃນວຽກງານຕົວຈິງໃຫ້ເກີດດອກອອກຜົນ ເຮັດໃຫ້ແຜນການຈັດເຝິກອົບຮົມ ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ອີກດ້ວຍ.

(ນາງ ຄອນສະຫວັນ ເມກສະຫວັນ)

# ຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ເຂດ 4 ໃຫ້ສຳພາດຕໍ່ສື່ມວນຊົນ ສະພາແຫ່ງຊາດ

# ຮຽບຮຽງໂດຍ: ແສງພອນ ອິນນະລົງ



ໃນໂອກາດເຂົ້າຮ່ວມກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ 12 ສະບັບ ຢູ່ທີ່ແຂວງອຸດົມໄຊ, ທ່ານ ຄຳດີ ວົງລ້ອມ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 4, ປະທານສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ, ໄດ້ຕາງໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແລະ ສະມາຊິກສະພາປະຊາຊົນແຂວງອຸດົມໄຊ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນຂອງສະພາແຫ່ງຊາດ ວ່າ:

ໄລຍະຜ່ານມາເຫັນວ່າການໂຄສະນາເຜີຍແຜ່ກົດໝາຍທີ່ໄດ້ຮັບຮອງໄປແລ້ວ 160 ສະບັບ ໄດ້ຈັດຕັ້ງປະຕິບັດແຕ່ສູນກາງຮອດທ້ອງຖິ່ນ ຈາກຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນຂະແໜງການຍຸຕິທຳ, ສະພາປະຊາຊົນແຂວງ, ໄອຍະການປະຊາຊົນ, ສານປະຊາຊົນ, ປກຊ-ປກສ ໄດ້ເປັນເຈົ້າການເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ ຕະຫລອດຮອດປະຊາຊົນບັນດາເຜົ່າດ້ວຍຮູບການເຜີຍແຜ່ທາງວິທະຍຸ, ທາງໂທລະໂຄ່ງ ແລະ ອື່ນໆ ທັງນີ້ກໍ່ເພື່ອເປັນການໂຄສະນາ, ປຸກລະດົມ, ສຶກສາອົບຮົມສ້າງຄວາມຮັບຮູ້, ຄວາມເຂົ້າໃຈ, ສ້າງສະຕິເຄົາລົບກົດໝາຍ ຕິດພັນກັບການດຳລົງຊີວິດທາກິນລ້ຽງຊີບອັນບໍລິສຸດຕໍ່ໜ້າກົດໝາຍ, ສ້າງຄວາມເປັນເອກະພາບທາງດ້ານທັດສະນະ, ຄວາມຮັບຮູ້ເຂົ້າໃຈ ແລະ ການກະທຳຕົວຈິງຂອງປະຊາຊົນໃນທົ່ວແຂວງ ໃນການຈັດຕັ້ງປະຕິບັດກົດໝາຍໃຫ້ໄດ້ຢ່າງເດັດຂາດ ແລະ ເຂັ້ມງວດ.

ຕໍ່ການປະເມີນການຈັດຕັ້ງປະຕິບັດກົດໝາຍ 12 ສະບັບ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງນີ້ ເຫັນວ່າມີຫລາຍບັນຫາມີຄວາມຈຳເປັນຕ້ອງໄດ້ສ້າງ ແລະ ປັບປຸງເພື່ອໃຫ້ສອດຄ່ອງກັບສະພາບຊີວິດ-ສັງຄົມໃນຕົວຈິງ, ທັງເປັນການຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການ ໃນການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍ ສ້າງໄດ້ເນື້ອໃນທີ່ຮັດກຸມ, ຈະແຈ້ງ, ຄົບຖ້ວນ. ສະນັ້ນ, ການທາບທາມ ແລະ ການປະກອບຄຳເຫັນຄັ້ງນີ້ ແມ່ນເພື່ອເປັນການອຸດຊ່ອງຫວ່ານສວຍໃຊ້ກົດໝາຍໄປໃນທາງທີ່ບໍ່ສອດຄ່ອງໃນການຈັດຕັ້ງປະຕິບັດຂອງພະນັກງານ, ການລົງທຶນພາຍໃນ ແລະ ຕ່າງປະເທດ.

ຕອນທ້າຍ, ທ່ານຍັງໄດ້ຮຽກຮ້ອງມາຍັງບັນດາກະຊວງ, ພະແນກການ ແລະ ພາກສ່ວນຕ່າງໆ ເພີ່ມທະວີໃນການໂຄສະນາເຜີຍແຜ່ບັນດາກົດໝາຍໃຫ້ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນໃຫ້ກວ້າງຂວາງ ແລະ ເລິກເຊິ່ງກວ່າເກົ່າ ເພື່ອເປັນການສ້າງສະຕິໃຫ້ເຂົາເຈົ້າມີຄວາມເຂົ້າໃຈເຄົາລົບກົດໝາຍ ຕິດພັນກັບການຈັດຕັ້ງປະຕິບັດກົດໝາຍໃຫ້ເຂັ້ມງວດກວ່າເກົ່າ ເພື່ອກ້າວໄປສູ່ການສ້າງລັດແຫ່ງກົດໝາຍ ແລະ ຂໍຮຽກຮ້ອງມາຍັງບັນດາທ່ານຄະນະພັກທຸກຂັ້ນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ຈົ່ງເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະ ໂຄສະນາປຸກ ລະດົມເຜີຍແຜ່ກົດໝາຍໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ພ້ອມທັງເປັນແບບຢ່າງນຳໜ້າໃນການເຄົາລົບ, ປະຕິບັດກົດໝາຍຢ່າງເຂັ້ມງວດ ແລະ ຮຽກຮ້ອງມາຍັງປະຊາຊົນບັນດາເຜົ່າ, ນັກທຸລະກິດ, ຜູ້ປະກອບການຕ່າງໆ ຈົ່ງໄດ້ສຶກສາ, ຮຽນຮູ້ບັນດາກົດໝາຍຕ່າງໆ ໂດຍສະເພາະແມ່ນບັນດາກົດໝາຍທີ່ພົວພັນກັບການເຄື່ອນໄຫວດຳລົງຊີວິດ ຕິດພັນກັບການປະກອບອາຊີບຂອງຕົນ, ເພື່ອປະຕິບັດສິດ, ພັນທະຂອງຕົນຢ່າງຖືກຕ້ອງ ແລະ ຄົບຖ້ວນ ປະກອບສ່ວນໃນການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

# ຈັດຕັ້ງເຜີຍແຜ່ຫລາຍນິຕິກຳທີ່ສຳຄັນໃຫ້ແກ່ພະນັກງານ-ລັດຖະກອນ



(ສພຊ) ຕອນບ່າຍວັນທີ 31 ຕຸລາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມເຜີຍແຜ່ນິຕິກຳທີ່ສຳຄັນ ໂດຍການເປັນປະທານຂອງທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການສະພາປະຊາຊົນແຂວງ; ມີປະທານ-ຮອງປະທານຄະນະສະພາຊາຊົນແຂວງ, ຮອງເລຂາທິການສະພາປະຊາຊົນແຂວງ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງທ່ານ ພອນສະຫວັນ ສັກຕິຄຸນ ເຜີຍແຜ່ຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ສະບັບເລກທີ 388/ຈຂ, ລົງວັນທີ 12 ພຶດສະພາ 2022; ຮັບຟັງທ່ານ ຄຳມາ ສຸລິວົງ ຮອງເລຂາທິການສະພາປະຊາຊົນແຂວງ ຂຶ້ນເຜີຍແຜ່ດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ສະບັບເລກທີ 205/ລບ, ລົງວັນທີ 22 ກໍລະກົດ 2022 ແລະ ເຜີຍແຜ່ແຈ້ງການ ວ່າດ້ວນການຈັດຕັ້ງປະຕິບັດລາຍຈ່າຍ ງົບປະມານງວດ 4 ປີ 2022 ສະບັບເລກທີ 2613/ກງ, ລົງວັນທີ 29 ສິງຫາ 2022; ຮັບຟັງທ່ານ ແສງສະຫວ່າງ ຈິດທະວົງ ຫົວໜ້າຂະແໜງບໍລິຫານ-ການເງິນ ຂຶ້ນເຜີຍແຜ່ດຳລັດວ່າດ້ວຍລົດຂອງລັດ ສະບັບເລກທີ 599/ນຍ, ລົງວັນທີ 29 ກັນຍາ 2022 ແລະ ແຈ້ງການຂອງອົງການກວດກາລັດແຂວງກ່ຽວກັບການຕິດຕາມກວດກາ ການຄຸ້ມຄອງ, ນຳໃຊ້ພາຫະນະ (ລົດໃຫຍ່) ຂອງລັດເຂົ້າໃນວຽກງານລັດຖະການ ສະບັບເລກທີ 977/ອກລ, ລົງວັນທີ 3 ຕຸລາ 2022.

ທັງນີ້, ກໍເພື່ອໃຫ້ພະນັກງານ-ລັດຖະກອນໄດ້ຮັບຮູ້, ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດບັນດາເນື້ອໃນຂອງນິຕິກຳດັ່ງກ່າວ ໃຫ້ໄດ້ຮັບຜົນດີ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຕິດຕາມກວດກາຂົງເຂດສຶກສາ



(ສພຊ) ໂດຍປະຕິບັດຕາມແຜນການຕິດຕາມກວດກາປະຈຳປີ 2022 ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງຫົວພັນ ສະບັບເລກທີ 05 ລົງວັນທີ 28 ເມສາ 2022 ແລະ ແຈ້ງການຂອງຄະນະເລຂາທິການ ສະພາແຫ່ງຊາດ ສະບັບເລກທີ 411/ຄລສ.ກວທສ, ລົງວັນທີ 16/9/2022 ວ່າດ້ວຍການໃຫ້ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການສັງກັດກຳມາທິການວັດທະນະທຳ-ສັງຄົມ ປະຈຳເຂດເລືອກຕັ້ງ ປະສານສົມທົບກັບຄະນະກຳມະການວັດທະນະທຳ-ສັງຄົມ ສະພາປະຊາຊົນແຂວງ ເປັນເຈົ້າການໃນການຕິດຕາມກວດກາກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ຕາມມະຕິເລກທີ 41/ສພຊ, 42/ສພຊ ລົງວັນທີ 17 ພະຈິກ 2021 ແລະ ເພື່ອເປັນການເກັບກຳຂໍ້ມູນສະໜອງໃຫ້ແກ່ການກະກຽມເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX ແລະ ເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ຖືກຕ້ອງ ແລະ ຈະແຈ້ງ.

ລະຫວ່າງວັນທີ 24-25 ຕຸລາ 2022 ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນແຂວງຫົວພັນ ນຳໂດຍທ່ານ ສີຄຳ ບຸນມີໄຊ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນຮ່ວມກັບທີມງານພະແນກສຶກສາແຂວງ ນຳໂດຍທ່ານ ມົນທອງ ລຽນຕິຄຸນ ຫົວໜ້າພະແນກສຶກສາ ແລະ ກິລາແຂວງ ຢູ່ບາງໂຮງຮຽນທີ່ມີຄວາມຫຍຸ້ງຍາກ ຢູ່ເມືອງວຽງໄຊ ເປັນຕົ້ນແມ່ນໂຮງຮຽນມັດທະຍົມສົມບູນປານ, ມັດທະຍົມຕົ້ນນາຈອງ, ໂຮງຮຽນປະຖົມສົມບູນຕະແອ້ນ.

ໃນການເຄື່ອນໄຫວແຕ່ລະຈຸດ, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດ 14 ຕົວຊີ້ວັດທີ່ສະພາຮັບຮອງຈາກອຳນວຍການໂຮງຮຽນ, ຄູອາຈານ ແລະ ອົງການປົກຄອງຂັ້ນບ້ານ. ຈາກນັ້ນ, ທ່ານ ສີຄຳ ບຸນມີໄຊ ແລະ ທ່ານ ມົນທອງ ລຽນຕິຄຸນ ຜັດປ່ຽນກັນໄດ້ອະທິບາຍຊີ້ແຈງຕໍ່ກັບບັນຫາຄູອາຈານມີຄວາມສົນໃຈ ພ້ອມທັງມີຄຳເຫັນໂອ້ລົມເນັ້ນໃຫ້ຄູອາຈານ ແລະ ອົງການປົກຄອງບ້ານ, ພໍ່ແມ່ນັກຮຽນຈົ່ງພ້ອມກັນເອົາໃຈໃສ່ລະດົມລູກຂອງຕົນທີ່ມີເກນອາຍຸຕ້ອງໄດ້ເຂົ້າໂຮງຮຽນ, ຄູອາຈານຕ້ອງໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ສິດສອນໃນການຂຶ້ນຫ້ອງລົງຫ້ອງໃຫ້ເຕັມໂມງເຕັມເວລາ, ຍຶດຖືຈັນຍາບັນຈັນຍາທຳຂອງຕົນ ເຮັດໃຫ້ຄຸນນະພາບການສຶກສາສູງຂຶ້ນ ເພື່ອໃຫ້ບັນລຸຕົວເລກຄາດໝາຍທີ່ສະພາໄດ້ຮັບຮອງ.

(ນັກຂ່າວ ສພຂ ຫົວພັນ)

# ກອງປະຊຸມປະຈຳເດືອນຕຸລາ ຂອງຄະນະປະຈຳ ສພຂ ສາລະວັນ



(ສພຊ) ໃນຕອນເຊົ້າຂອງວັນທີ 25 ຕຸລາ 2022 ຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມສະຫລຸບການຈັດຕັ້ງປະຕິບັດວຽກງານ ປະຈຳເດືອນ 10 ປີ 2022 ແລະ ທິດທາງແຜນການ ປະຈຳເດືອນ 11 ປີ 2022 ທີ່ຫ້ອງປະຊຸມ ສພຂ ສາລະວັນໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະປະຈຳ, ປະທານ ສພຂ ສາລະວັນ; ເຂົ້າຮ່ວມມີຮອງປະທານ,ບັນດາທ່ານຄະນະປະຈຳ ສພຂ ສາລະວັນ, ຄະນະກຳມະການ, ຄະນະເລຂາທິການ ພ້ອມດ້ວຍພະນັກງານພາຍໃນ ສພຂ ເຂົ້າຮ່ວມ.

ໃນທີ່ປະຊຸມ, ທ່ານ ສົມພອນ ແສງສຸລິຈັນ ກຳມະການຄະນະປະຈຳ, ເລຂາທິການ ສພຂ ໄດ້ຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳເດືອນ 10/2022 ແລະ ທິດທາງແຜນການປະຈຳເດືອນ 11/2022 ຂອງຄະນະປະຈຳ ໂດຍລວມໄດ້ເອົາໃຈໃສ່ຊີ້ນຳ-ນຳພາຢ່າງໃກ້ຊິດໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ອັນພົ້ນເດັ່ນ ເຊັ່ນ ດ້ານນິຕິກຳ ໄດ້ເຂົ້າຮ່ວມທາບທາມຮ່າງກົດໝາຍ ຈຳນວນ 12 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX, ໄດ້ປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບ ຂົງເຂດຍຸຕິທຳ; ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ໄດ້ຄົ້ນຄວ້າພິຈາລະນາບັນຫາສຳຄັນຂອງແຂວງ ຕາມການສະເໜີຂອງອົງການປົກຄອງແຂວງຜ່ານກອງປະຊຸມຄະນະປະຈຳ ສພຂ ສາລະວັນ; ດ້ານການຕິດຕາມກວດກາ ໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕິດພັນກັບສອງວາລະແຫ່ງຊາດ, ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ມະຕິກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຕິດພັນກັບການພົບປະຜູ້ມີສິດເລືອກຕັ້ງ ຢູ່ 2 ເມືອງ ໄດ້ 4 ຈຸດ ມີຜູ້ເຂົ້າຮ່ວມຮັບຟັງ 340 ກວ່າຄົນ ແລະ ໄດ້ມອບເຄື່ອງຊ່ວຍເຫລືອປະເພດເຄື່ອງອຸປະໂພກ ແລະ ອຸປະກອນການຮຽນ ຈຳນວນໜຶ່ງໃຫ້ຈຸດທີ່ລົງເຄື່ອນໄຫວ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ຈຳນວນ 12 ເລື່ອງ, ຮັບຄຳສະເໜີ 4 ເລື່ອງ ແລະ ໄດ້ຕ້ອນຮັບໃຫ້ຄຳປຶກສາທາງດ້ານກົດໝາຍ 2 ເລື່ອງ; ນອກນັ້ນ, ຍັງມີວຽກງານການເຂົ້າເຝິກອົບຮົມສ້າງທັກສະໃນຫົວຂໍ້ຕ່າງໆ ໃຫ້ແກ່ບັນດາສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ຄະນະກຳມະການພາຍໃນ ສພຂ ທີ່ສະພາແຫ່ງຊາດຈັດຂຶ້ນ.

ພ້ອມກັນນັ້ນ, ຍັງໄດ້ມີການກຳນົດເອົາແຜນການເຄື່ອນໄຫວວຽກງານທີ່ສຳຄັນຂອງຄະນະປະຈຳ ສພຂ ສາລະວັນ ປະຈຳເດືອນ 11/2022 ແລະ ຍັງໄດ້ຮ່ວມກັນຄົ້ນຄວ້າປຶກສາຫາລືແຕ່ຫົວທີເພື່ອອອກເປັນມະຕິຄະນະປະຈຳ ສພຂ ສາລະວັນ ຮັບຮອງເອົາຫົວຂໍ້ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ສາລະວັນ ຊຸດທີ II ປະກອບມີ: ບົດລາຍງານ ໂດຍສັງເຂບຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ປະຈຳປີ 2022 ແລະ ແຜນການປະຈຳປີ 2023; ບົດລາຍງານການຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ຢູ່ແຂວງສາລະວັນ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການປະຈຳປີ 2023 ຂອງອົງການກວດກາລັດແຂວງ, ກວດກາຕາມຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ປະຈຳປີ 2020 ຂອງອົງການກວດກາລັດແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການປະຈຳປີ 2023 ຂອງອົງການໄອຍະການປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ແຜນການປະຈຳປີ 2023 ຂອງສານປະຊາຊົນ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ຂອງ ສພຂ ສາລະວັນ; ບົດປະກອບຄຳເຫັນຂອງແນວລາວສ້າງຊາດແຂວງ ຕໍ່ການເຄື່ອນໄຫວວຽກງານຂອງ ສພຂ ສາລະວັນ; ພິຈາລະນາຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍຂອງແຂວງ ຈຳນວນ 3 ສະບັບ ແລະ ປະເມີນບຸກຄະລາກອນທີ່ ສພຂ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງລົງເລິກປະເມີນໃສ່ຂອບເຂດຄວາມຮັບຜິດຊອບໂດຍກົງຕໍ່ເປົ້າໝາຍທີ່ຖືກປະເມີນ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II ເຊິ່ງຄາດວ່າຈະໄດ້ຈັດຂຶ້ນໃນກາງເດືອນມັງກອນ 2023 ທີ່ຈະມາເຖິງນີ້.

(ດີລຳພົນ ພົມມະຈັນ)

# ສສຊ ເຂດ 17 ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ເທື່ອທີ 3



(ສພຊ) ໃນວັນທີ 19 ຕຸລາ 2022 ສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 17 ແຂວງອັດຕະປື ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທີ່ຫໍປະຊຸມໃຫຍ່ຂອງແຂວງ ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 17, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ; ເຂົ້າຮ່ວມຮັບຟັງມີບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກ, ອົງການທຽບເທົ່າພະແນກ, ພະນັກງານ-ລັດຖະກອນ ໃນຂົງເຂດຕຸລາການ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດການເມືອງອ້ອມຂ້າງແຂວງ.

ທັງນີ້, ກໍເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ເຂົ້າໃຈຕໍ່ການນຳພາຂອງພັກ, ລະບຽບກົດໝາຍຂອງລັດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືຂອງແຂວງ ແນໃສ່ຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຊ ກໍຄືສະພາປະຊາຊົນຂັ້ນແຂວງ ແລະ ເນື້ອໃນວຽກງານສຳຄັນທີ່ໄດ້ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ພ້ອມກັນນຳເອົານິຕິກຳໃຕ້ກົດໝາຍ ກໍຄືມະຕິທີ່ໄດ້ຮັບຮອງໄປຈັດຕັ້ງເຜີຍແຜ່ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຂອງຕົນຢ່າງເປັນຮູບປະທຳ ແລະ ມີຜົນສຳເລັດ ເຮັດໃຫ້ພໍ່ແມ່ປະຊາຊົນຫລຸດພົ້ນອອກຈາກຄວາມທຸກຍາກເປັນກ້າວໆ.

ໃນວາລະກອງປະຊຸມ, ສສຊ ປະຈຳເຂດເລືອກຕັ້ງທີ 17 ໄດ້ຍົກໃຫ້ເຫັນບັນຫາສຳຄັນທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ເປັນຕົ້ນແມ່ນເນື້ອໃນມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ຮັບຮອງຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ຮັບຮອງການປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ຮັບຮອງທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ຮັບຮອງການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ຮັບຮອງການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໂດຍສະເພາະການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນ ທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ ແລະ ຮັບຮອງເອົາການເລືອກຕັ້ງປະກອບອົງການກວດສອບແຫ່ງລັດ, ຮັບຮອງເອົາການສະເໜີແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ.

ພ້ອມກັນນັ້ນ, ກໍໄດ້ຍົກໃຫ້ເຫັນມະຕິກອງປະຊຸມຂອງ ສພຂ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງ ສພຂ ໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາເທື່ອທີ 3 ແລະ ແຜນຮອດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II, ຮັບຮອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2022 ແລະ ທິດທາງ 6 ເດືອນທ້າຍປີ 2022, ຮັບຮອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂັ້ນແຂວງ 6 ເດືອນຕົ້ນປີ 2022 ແລະ ທິດທາງ 6 ເດືອນທ້າຍປີ 2022; ນອກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ມີຄຳສະເໜີ ແລະ ແລກປ່ຽນຄຳຄິດຄຳເຫັນ.

(ວິນັດ)



## ສຸກສະບາຍຫາຍໂລຄາ

# ຫາວຫລາຍ ອາດມີອັນຕະຫລາຍຕໍ່ສຸຂະພາບ

**ແປ ແລະ ຮຽບຮຽງໂດຍ: ສາວແວ່ນ**



ເມື່ອທ່ານຫາວ ຄົນອ້ອມຂ້າງມັກຈະຖາມວ່າ ນອນເດິກບໍ່ ຫລື ບໍ່ໄດ້ນອນ? ຖ້າກໍາລະນີພວມນັ່ງລົມກັນຢູ່ ທ່ານອາດຈະຖືກຖາມວ່າຮູ້ສຶກເບື່ອບໍ່ ຫລື ອາດຖືກແນມດ້ວຍສາຍຕາທີ່ບົ່ງບອກວ່າທ່ານກໍາລັງເສຍມາລະຍາດ ແທ້ຈິງແລ້ວຮ່າງກາຍສັ່ງໃຫ້ຫາວແຕ່ເພາະສາເຫດຫຍັງນັ້ນ ແລະ ຫາວສໍ່າໃດຈຶ່ງເອີ້ນວ່າຜິດປົກກະຕິ; ມື້ນີ້, ໃນຄໍລໍາສຸກສະບາຍຫາຍໂລຄາ ຈະນໍາສະເໜີຂໍ້ມູນ ເພື່ອເປັນການສັງເກດໂຕເອງ.

ການຫາວ ແມ່ນກົນໄກໜຶ່ງຂອງຮ່າງກາຍທີ່ບົ່ງບອກວ່າ ຕ້ອງການເອົາອົກຊີແຊນຈາກອາກາດ ເຂົ້າໄປໃນກະແສເລືອດ ພ້ອມທັງຊ່ວຍຂັບກາກໂບນິກອອກຈາກກະແສເລືອດ ເພື່ອຮັກສາຄວາມສົມດູນຂອງຮ່າງກາຍ; ການຫາວຈະເກີດຂຶ້ນເມື່ອຮ່າງກາຍມີອົກຊີແຊນບໍ່ພຽງພໍ ຫລື ມີກາກໂບນິກຫລາຍເກີນໄປໃນເລືອດ ຈົນເຮັດໃຫ້ເຫງົານອນ ເພາະມີອາການງ້ວງຊຶມ ແລະ ໃນທີ່ສຸດກໍຫາວນອນນັ້ນເອງ.

ການຫາວນອນເລື້ອຍໆ ແມ່ນການຫາວທີ່ເກີດຂຶ້ນຫລາຍກວ່າໜຶ່ງຄັ້ງຕໍ່ນາທີ ເຖິງວ່າສາເຫດທົ່ວໄປຂອງການການຫາວ ອາດຈະເກີດຈາກຄວາມຢາກນອນ ຫລື ໝົດແຮງ ແຕ່ບາງເທື່ອການຫາວທີ່ຜິດປົກກະຕິນັ້ນ ອາດຈະເກີດມາຈາກເຫດຜົນ ດັ່ງນີ້:

**1. ພັກຜ່ອນບໍ່ພຽງພໍ**

ການພັກຜ່ອນບໍ່ພຽງພໍໃນຕອນກາງຄືນ ເຮັດໃຫ້ເກີດອາການຢາກນອນໃນຕອນກາງເວັນ ເບິ່ງຄືວ່າບໍ່ຮ້າຍແຮງ ແຕ່ອາດຈະສົ່ງຜົນກະທົບຕໍ່ລະບົບພູມຕ້ານທານ ເຮັດໃຫ້ເກີດຄວາມສ່ຽງຕໍ່ການເປັນພະຍາດຮ້າຍແຮງຕ່າງໆ ເຊັ່ນ: ໂລກອ້ວນ, ໂລກຫົວໃຈ ຫລື ໂລກຊຶມເສົ້າ ແລະ ອື່ນໆ.

**2. ນອນບໍ່ຫລັບ**

ການນອນບໍ່ຫລັບ ເປັນອາການທີ່ຮ່າງກາຍຮູ້ສຶກຢາກນອນ ແຕ່ບໍ່ສາມາດຫລັບໄດ້ ອາດຈະໃຊ້ເວລາດົນກວ່າປົກກະຕິ, ນອນຫລັບຍາກແຕ່ຕື່ນເຊົ້າ ຫລື ຕື່ນໃນກາງຄືນແລ້ວບໍ່ສາມາດນອນຕໍ່ໄດ້ ເຮັດໃຫ້ຮ່າງກາຍຮູ້ສຶກອ່ອນເພຍ ສະນັ້ນ, ຄວນເຂົ້ານອນໃຫ້ເປັນເວລາ ເພື່ອໃຫ້ຮ່າງກາຍຊິນເຄີຍ ແລະ ຄວນງົດເຄື່ອງດື່ມທີ່ມີສານກະຕຸ້ນສະໝອງ ເຊັ່ນ: ຄາເຟອີນທີ່ມີໃນຊາ, ກາເຟ, ນໍ້າອັດລົມ, ເຄື່ອງດື່ມພະລັງງານ ແລະ ອື່ນໆ; ແຕ່ຖ້າມີອາການນອນບໍ່ຫລັບເລື້ອຍໆ ຄວນໄປພົບແພດ.

**3. ຜົນຂ້າງຄຽງຂອງຢາ**

ກຸ່ມຄົນທີ່ກິນຢາ ເຊັ່ນ: ຢາຕ້ານອາການຊຶມເສົ້າ ຫລື ວິຕົກກັງວົນ ອາດຈະເຮັດໃຫ້ເກີດຜົນຂ້າງຄຽງ ມີອາການງ້ວງຊຶມ ແຕ່ນອນບໍ່ຫລັບ.

**4. ຜົນຂ້າງຄຽງຈາກພະຍາດທີ່ເປັນ**

ມີຫລາຍພະຍາດ ທີ່ເຮັດໃຫ້ຮ່າງກາຍງ້ວງນອນຫລາຍກວ່າປົກກະຕິ ເຊັ່ນ: ເປືອກປະສາດອັກເສບ MS (multiple sclerosis), ເນື້ອງອກໃນສະໝອງ, ໂລກຫລອດເລືອດໃນສະໝອງ, ພະຍາດບ້າໝູ ແລະ ອື່ນໆ.

**www.sanook.com**

## ສາລາກະວີ

# ຄືບໍ່ຂຽນຄວາມລາວ?

**# ໂດຍ: ເຜັດວິຈິດ**

❈ ຍຸກສັງຄົມເດັ່ນກ້າວ
ຟູປະຊາຊົນລາວ
ໂຄສະນາຂາຍຊື້
ພາກັນຂຽນແຕ່ງປ້າຍ

ການແຂ່ງຂັນສູງ
ແຂ່ງຂັນກັນຄ້າ
ຫລາຍທາງຍາດແຍ່ງ
ພຸງພົ້ວທົ່ວເມືອງ

❈ ແຕ່ຄາວ ລຸງແມ່ປ້າ
ໝາຍເຖິງເຮືອນຮັງເຮົາ
ແຕ່ຍຸກຫລັງມານີ້
ພາກັນເອີ້ນວ່າບ້ານ

ເອີ້ນວ່າເຄຫັງ
ນັ່ງນອນເນົາຢັ້ງ
ມີຄໍາມາປ່ຽນ
ຫລານນ້ອຍຈື່ຈໍາ

❈ ແຕ່ກ່ອນຄໍາວ່າບ້ານ
ມີອາຄານຫລາຍຫລັງ
ອອນຊອນເດດຽວນີ້
ບອກວ່າຕິດໃສ່ບ້ານ

ລວມໝູ່ເຮືອນຊານ
ຢູ່ໂຮມຮຽງຊ້ອນ
ມີແອເຢັນຕິດປະກາດ
ເຢັນແທ້ແນ່ນອນ

❈ ແອມາຕິເອ້ອນຕ້ອນ
ສັງມາໂຄສະນາ
ປານວ່າແອຂອງເຈົ້າ
ຕິດເຄື່ອງດຽວດັ່ງດ້າມ

ແຂວນຢູ່ໃນເຮືອນ
ວ່າແອຕິດບ້ານ
ເຢັນໄກໄປທົ່ວ
ເຢັນແທ້ທຸກເຮືອນ

❈ ຄົນທີ່ຂາຍແວ່ນແກ້ວ
ວ່າກະຈົກຂອງລາວ
ສັງບໍ່ຄືຄໍາເວົ້າ
ເພິ່ນພາເອີ້ນແວ່ນແກ້ວ

ຕິດແຜ່ນໂຄສະນາ
ຈ່າວຂາຍໃຫ້ຄົນຊື້
ຄົນລາວຄາວກ່ອນ
ມາຕັ້ງແຕ່ເດີມ

❈ ປັດຈຸບັນຫາກເລີ້ມ
ຄົນປັບປຸງແປງລົດ
ໂຄສະນາໃນປ້າຍ
ຫລືວ່າໄດ້ແຕ່ງແຕ້ມ

ຮຽກລົດມາເປັນຍົນ
ແຕ່ງແປງໃຫ້ງາມໂກ້
ປະດັບຍົນແຜ່ນໃຫຍ່
ປະດັບແທ້ໝູ່ຍົນ

❈ ຄໍາລາວແຕ່ກ່ອນກໍ້
ສັງບໍ່ເອົາມາຂຽນ
ຫລືເຈົ້າອາຍເຂົາເວົ້າ
ພາສາລາວ ຄົນລາວຄວນເອກອ້າງ

ມີຢູ່ມະຫາສານ
ໃສ່ຍໍຍັງປ້າຍ
ສໍານວນເຮົາດ້ອຍຄ່າ
ຖະໜອມໃຊ້ຮັກສາ ທ່ານເອີຍ!



## ທັກທາຍ ລະບາຍ

**# ສາວຈົ້ມ**

***(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຖິ່ງພິທີການ)***

❈ ***ບຸນ***ນະມັດສະການພະທາດຫລວງວຽງຈັນ ແລະ ງານວາງສະແດງສິນຄ້າ ຈະເລີ່ມຂຶ້ນຢ່າງເປັນທາງການໃນວັນທີ **4-11 ພະຈິກນີ້** ເຊິ່ງໃນປີນີ້ຈະມີການຈັດຫລາກຫລາຍກິດຈະກໍາ ມີການນໍາສິນຄ້າຫລາຍປະເພດມາວາງຂາຍການເປັນເທດສະການໃຫຍ່ປະຈໍາປີ ***ພະທາດຫລວງມິ່ງແກ້ວ ສັນຍາລັກແດນລາວ*** ຂໍໃຫ້ຊາວປະຊາເຮົາ ຮ່ວມແຮງກັນໄວ້ ***ຮັກສາຄວາມສະອາດ***ໃຫ້ສວຍງາມ***ໜ້າຊົມຫລ່ຽວ*** ຍາມເມື່ອບຸນຜ່ານພົ້ນ ຊິງາມກ້ຽງດັ່ງເດີມ ***ທ່ານເອີຍ!***

❈ **ຍັງ**ສືບຕໍ່ ບໍ່ໜີຈາກງານບຸນນະມັດສະການ **ພະທາດຫລວງວຽງຈັນ** ເພາະຜ່ານມານັ້ນ ເຫັນວ່າມີຊາວຊໍ້ ກ່ຽວກັບເລື່ອງບໍລິການ **ຝາກລົດໃນງານບຸນ** ມັກມີບັນຫາໃຫ້ ສັງຄົມນໍາໄປເວົ້າ ໃສກັບເປັນບັນຫາໃຫຍ່ ຫລາຍບ່ອນເກັບຄ່າຝາກ ບໍ່ຕົງກັບເພີນແຈ້ງໄວ້ **ທາງການເຈົ້າວ່າມາ** ນັ້ນແລ້ວ!

❈ **ກອງ**ປະຊຸມປະຈໍາປີຂອງຄະນະເລຂາທິການສະພາແຫ່ງຊາດ ຈະຈັດຂຶ້ນໃນວັນທີ **7-8 ພະຈິກນີ້** ຍິນດີຕ້ອນຮັບຄະນະເລຂາທິການ ສພຂ ທົ່ວປະເທດ ພ້ອມດ້ວຍບັນດາແຂກຖືກເຊີນທຸກພາກສ່ວນ ປີໜຶ່ງກາຍຜ່ານພົ້ນ **ຜົນງານໃຫຍ່ຈຽກເສນາທິການ** ຫລາຍໆທ່ານຊິໄດ້ນໍາມາຍົກ ເພື່ອຊົມເຊີຍຍ້ອງ ບາງຜ່ອງຊິໄດ້ປັບປຸງແກ້ ບາງບັນຫາຄາຂອດ ເພື່ອບັນລຸລອດພົ້ນ ໃຫ້ດີຂຶ້ນກວ່າເດີມ **ນັ້ນແລ້ວ!**

## ຊວນຍິ້ມ

**# ແອ່ນຕຸ້ງ**

**ເລື່ອງ: ລູກທ່ານລັດຖະມົນຕີ**

ລັດຖະມົນຕີຄົນໜຶ່ງຖາມລູກວ່າ

-ໄດ້ບໍ່ລູກ ເສັງປາກເປົ່າມື້ນີ້?

- ສະບາຍ ຜ່ານແນ່ນອນ

-ອາຈານຖາມວ່າແນວໃດ?

- ເພິ່ນຖາມວ່າ ເປັນລູກໃຜ ? ລູກຕອບວ່າ ເປັນລູກ ທ່ານລັດຖະມົນຕີ ລູກຄິດວ່າຜ່ານ 100%

- ຊື! ເຈົ້າໃໝ່ເບິ່ງ ລູກຫລ້າ?

-???



### ຄະຕິເຕືອນໃຈ

**# ດອກສະຍອມ**

ຢ່າເຫັນແກ່ເງິນແສນໄຄ່
ໃຫ້ເຫັນແກ່ໄພ່ແສນເມືອງ

# ກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຕໍ່ຈາກສະບັບກ່ອນ...

## ໝວດທີ 3
## ການຖ່າຍພາບ

**ມາດຕາ 18 ການຖ່າຍພາບ**

ການຖ່າຍພາບ ແມ່ນ ການບັນທຶກຂໍ້ມູນເທິງພື້ນຜິວໂລກ ດ້ວຍການຖ່າຍພາບທາງອາກາດ, ຖ່າຍພາບພື້ນດິນ ແລະ ພື້ນນ້ຳ ເພື່ອສ້າງແຜນທີ່.

**ມາດຕາ 19 ການຖ່າຍພາບທາງອາກາດ**

ການຖ່າຍພາບທາງອາກາດ ແມ່ນ ການບັນທຶກຂໍ້ມູນເທິງພື້ນຜິວໂລກ ດ້ວຍການຖ່າຍພາບຈາກດາວທຽມ, ເຮືອບິນ ແລະ ເຮືອບິນບໍ່ມີຄົນຂັບ.

ການຖ່າຍພາບຈາກດາວທຽມ ມີໜ້າວຽກ ດັ່ງນີ້:

1. ວາງແຜນວົງໂຄຈອນ ແລະ ກຳນົດພື້ນທີ່;
2. ປະມວນ ແລະ ວິເຄາະ ຂໍ້ມູນ;
3. ສຳເນົາຂໍ້ມູນ ແລະ ສ້າງແຜນທີ່ພູມສັນຖານ.

ການຖ່າຍພາບໂດຍເຮືອບິນ ແລະ ເຮືອບິນບໍ່ມີຄົນຂັບ ມີໜ້າວຽກ ດັ່ງນີ້:

1. ວາງແຜນແລວບິນ ແລະ ບິນຖ່າຍພາບ;
2. ສ້າງ ແລະ ວັດແທກຈຸດຄວບຄຸມການຖ່າຍພາບ;
3. ປະມວນ, ສຳເນົາຂໍ້ມູນ ເພື່ອສ້າງແຜນທີ່ພູມສັນຖານ ດ້ວຍພາບຖ່າຍ.

**ມາດຕາ 20 ການຖ່າຍພາບພື້ນດິນ ແລະ ພື້ນນ້ຳ**

ການຖ່າຍພາບພື້ນດິນ ແລະ ພື້ນນ້ຳ ແມ່ນການບັນທຶກຂໍ້ມູນເທິງໜ້າດິນ, ພື້ນດິນ ແລະ ພື້ນນ້ຳ ດ້ວຍເຄື່ອງບັນທຶກຂໍ້ມູນອັດຕະໂນມັດ.

**ມາດຕາ 21 ຄວາມຮັບຜິດຊອບກ່ຽວກັບການຖ່າຍພາບ**

ກະຊວງພາຍໃນ ເປັນຜູ້ສ້າງ ແລະ ຈັດຕັ້ງຜັນຂະຫຍາຍແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳ ເພື່ອນຳໃຊ້ເຂົ້າໃນການສ້າງແຜນທີ່ໃນຂອບເຂດທົ່ວປະເທດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຖ່າຍພາບ ເພື່ອສ້າງແຜນຜັງ ແລະ ແຜນທີ່ ຕ້ອງເປັນເຈົ້າການຮັບຜິດຊອບໂດຍກົງ ໃນການສະເໜີແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳຂອງຕົນ ຕໍ່ກະຊວງພາຍໃນ ເພື່ອພິຈາລະນາດ້ວຍການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບ ການສ້າງແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ວຽກງານສ້າງແຜນທີ່

**ມາດຕາ 22 ວຽກງານສ້າງແຜນທີ່**

ວຽກງານສ້າງແຜນທີ່ ມີ ດັ່ງນີ້:

1. ການສ້າງແຜນທີ່ພູມສັນຖານ;
2. ການສ້າງແຜນທີ່ວຽກສະເພາະ;
3. ການພິມແຜນທີ່.

## ໝວດທີ 1
## ການສ້າງແຜນທີ່ພູມສັນຖານ

**ມາດຕາ 23 ການສ້າງແຜນທີ່ພູມສັນຖານ**

ການສ້າງແຜນທີ່ພູມສັນຖານ ແມ່ນຂະບວນການສະແດງລາຍລະອຽດກ່ຽວກັບຮູບຮ່າງໜ້າດິນ, ລະດັບສູງ, ທີ່ຕັ້ງເຂດແດນຂອງ ບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງ, ຂອບເຂດການປົກຄອງ, ອຸທົກກະສາດ, ຕາໜ່າງຄົມມະນາຄົມ, ວັດຖຸທຳມະຊາດ ແລະ ສິ່ງປຸກສ້າງຕ່າງໆ ດ້ວຍລະບົບເຄື່ອງໝາຍ ຕາມມາດຕາສ່ວນ ແລະ ລະບົບເຄົ້າພິກັດໃດໜຶ່ງເທິງແຜ່ນພຽງ.

ມາດຕາສ່ວນສຳລັບແຜນທີ່ພູມສັນຖານ ມີ ສາມປະເພດ ດັ່ງນີ້:

1. ມາດຕາສ່ວນໃຫຍ່ ຊຶ່ງແມ່ນຂະໜາດຂອງແຜນທີ່ ທີ່ມີສ່ວນພູດຂອງມາດຕາສ່ວນ ແຕ່ ສິບພັນ (10 000) ລົງມາ ເປັນຕົ້ນ 1:10 000, 1:5000, 1:200;

2. ມາດຕາສ່ວນກາງ ຊຶ່ງແມ່ນຂະໜາດຂອງແຜນທີ່ ທີ່ມີສ່ວນພູດຂອງມາດຕາສ່ວນໃຫຍ່ກວ່າ ສິບພັນ (10 000) ຫາ ສອງແສນຫ້າສິບພັນ (250 000) ເປັນຕົ້ນ 1: 25 000, 1:50000, 1: 100 000;

3. ມາດຕາສ່ວນນ້ອຍ ຊຶ່ງແມ່ນຂະໜາດຂອງແຜນທີ່ ທີ່ມີສ່ວນພູດຂອງມາດຕາສ່ວນໃຫຍ່ກວ່າ ສອງແສນຫ້າສິບພັນ (250.000) ຂຶ້ນໄປ ເປັນຕົ້ນ 1: 500 000, 1:1 000 000.

**ມາດຕາ 24 ການອອກແບບ ແລະ ຕົບແຕ່ງແຕ້ມ ແຜນທີ່ພູມສັນຖານ**

ການອອກແບບ ແລະ ຕົບແຕ່ງແຕ້ມແຜນທີ່ພູມສັນຖານ ແມ່ນຂະບວນການກຳນົດລັກສະນະ ແລະ ສ້າງຂໍ້ມູນ, ການສ້າງຖານຂໍ້ມູນ, ການຕົບແຕ່ງແຕ້ມ ແລະ ຈັດພິມ ໂດຍມີຮູບແບບ, ສີສັນ ແລະ ເຄື່ອງໝາຍຫຍໍ້ຂໍ້ມູນພູມສາດຂອງແຕ່ລະມາດຕາສ່ວນ ຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 25 ການເກັບກຳຂໍ້ມູນແຜນທີ່ພູມສັນຖານ**

ການເກັບກຳຂໍ້ມູນແຜນທີ່ພູມສັນຖານ ມີ ສອງວິທີ ດັ່ງນີ້:

1. ການເກັບກຳຂໍ້ມູນແຜນທີ່ພາກສະໜາມ ເພື່ອນຳໃຊ້ໃນການກວດກາຄວາມຖືກຕ້ອງ ຂອງຂໍ້ມູນແຜນທີ່ ທີ່ສ້າງໃໝ່ຈາກພາບຖ່າຍທາງອາກາດ, ພາບຖ່າຍດາວທຽມ, ພາບຖ່າຍພື້ນດິນ ແລະ ພື້ນນ້ຳ;

2. ການເກັບກຳ ແລະ ທ້ອນໂຮມຂໍ້ມູນຈາກການສຳຫຼວດວັດແທກພາກສະໜາມ ເພື່ອສ້າງແຜນທີ່ໃໝ່ ແລະ ກວດກາຄືນຄວາມຖືກຕ້ອງ ຕາມສະພາບຕົວຈິງໃນພື້ນທີ່ ກ່ຽວກັບຂໍ້ມູນ ຂ່າວສານ ພູມສາດ.

**ມາດຕາ 26 ການຂຽນຊື່ພູມີປະເທດ**

ການຂຽນຊື່ພູມີປະເທດ ແມ່ນ ການຂຽນຊື່ສະຖານທີ່, ເປົ້າໝາຍດ້ານພູມສາດ ແລະ ທີ່ຕັ້ງພູມສາດໃດໜຶ່ງ ເພື່ອຢັ້ງຢືນ ແລະ ສ້າງຄວາມເປັນເອກະພາບໃນການເອີ້ນ, ການອ່ານ ແລະ ການຂຽນຊື່ດັ່ງກ່າວ.

ການຂຽນຊື່ພູມີປະເທດ ເປັນພາສາລາວ ແລະ ພາສາສາກົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ມີຊື່ໜຶ່ງຊື່ດຽວ ສຳລັບເປົ້າໝາຍດ້ານພູມສາດໃດໜຶ່ງ;

2. ກຳນົດຕາມຫຼັກພາສາສາດ, ລັກສະນະທົ່ວໄປ, ລັກສະນະເຊື່ອມໂຍງ, ລັກສະນະສືບທອດຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງທ້ອງຖິ່ນ;

3. ມີຊື່ທີ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຖືກນຳໃຊ້ໃນລະດັບສາກົນ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ສຳລັບຊື່ສະຖານທີ່ທີ່ຕ້ອງຂຽນຊື່ເປັນເອກະພາບ ມີກໍລະນີ ດັ່ງນີ້:

1. ສະຖານທີ່ຢູ່ຈຸດທີ່ຕັ້ງດຽວທີ່ມີຫຼາຍຊື່ເອີ້ນ, ຫຼາຍວິທີຜັນສຽງ ຫຼື ຫຼາຍວິທີຂຽນ;

2. ສະຖານທີ່ ທີ່ເກີດຂຶ້ນໃໝ່ ຫຼື ມີການປ່ຽນແປງເປົ້າໝາຍພູມສາດທີ່ພາໃຫ້ຊື່ສະຖານທີ່ມີການປ່ຽນແປງ.

ຊື່ສະຖານທີ່ທີ່ມີການປ່ຽນແປງ ເພື່ອໃຫ້ມີຄວາມເປັນເອກະພາບໃນການນຳໃຊ້ນັ້ນ ຕ້ອງໄດ້ຮັບການປັບປຸງສ້າງເປັນຖານຂໍ້ມູນ ແລະ ປະກາດ ໃຊ້ຢ່າງເປັນທາງການ.

ກະຊວງພາຍໃນເປັນຜູ້ປັບປຸງຫຼັກການການຂຽນຊື່ພູມີປະເທດພ້ອມທັງປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 27 ການດັດແກ້ຂໍ້ມູນແຜນທີ່ພູມສັນຖານ**

ການດັດແກ້ຂໍ້ມູນແຜນທີ່ພູມສັນຖານ ແມ່ນ ການປັບປຸງຂໍ້ມູນແຜນທີ່ໃຫ້ຖືກຕ້ອງ, ຊັດເຈນ ຕາມສະພາບການປ່ຽນແປງໃໝ່ ໃນແຕ່ລະໄລຍະຂອງພື້ນທີ່ ຊຶ່ງດຳເນີນການດັດແກ້ໃນໄລຍະ ຫ້າ ຫາ ເຈັດ ປີ ສຳລັບເຂດຕົວເມືອງ ແລະ ເຈັດ ຫາ ສິບ ປີ ສຳລັບເຂດຊົນນະບົດ ຫຼື ອີງຕາມສະພາບການປ່ຽນແປງທາງດ້ານພູມສາດ, ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໂດຍແມ່ນກະຊວງພາຍໃນ ເປັນຜູ້ດັດແກ້ຂໍ້ມູນດັ່ງກ່າວ.

ການດັດແກ້ຂໍ້ມູນແຜນທີ່ພູມສັນຖານ ມີ ສອງກໍລະນີ ດັ່ງນີ້:

1. ການກວດກາ ແລະ ດັດແກ້ ການແຕ້ມຈາກພາບຖ່າຍທີ່ບໍ່ຖືກຕ້ອງໃນການໃສ່ເຄື່ອງໝາຍຫຍໍ້ຂອງຂໍ້ມູນ ລວມທັງຂະໜາດຂອງແຕ່ລະຊັ້ນເຄື່ອງໝາຍ;

2. ການດັດແກ້ຂໍ້ມູນທີ່ເປັນການປັບປຸງຂໍ້ມູນຂອງແຜນທີ່ ທີ່ມີແລ້ວໃຫ້ມີຄວາມຊັດເຈນ ແລະ ຖືກຕ້ອງ ຕາມສະພາບ ແລະ ເງື່ອນໄຂຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

**ມາດຕາ 28 ການສ້າງຖານຂໍ້ມູນແຜນທີ່ພູມສັນຖານ**

ການສ້າງຖານຂໍ້ມູນແຜນທີ່ພູມສັນຖານ ແມ່ນ ການກຳນົດຊັ້ນຂໍ້ມູນດ້ວຍເຄື່ອງໝາຍຫຍໍ້ຂອງແຕ່ລະມາດຕາສ່ວນແຜນທີ່ ຊຶ່ງປະກອບດ້ວຍຊັ້ນຂໍ້ມູນ ດັ່ງນີ້:

1. ຂອບເຂດການປົກຄອງ;
2. ຈຸດທີ່ຕັ້ງຂອງການປົກຄອງ;
3. ຮູບແບບສາມມິຕິ;
4. ຕາໜ່າງຄົມມະນາຄົມ;
5. ອຸທົກກະສາດ;
6. ພືກສາຊາດ;
7. ລະດັບຊັ້ນຄວາມສູງຂອງໜ້າດິນ;
8. ເຄື່ອງໝາຍທີ່ຕັ້ງຂອງການກໍ່ສ້າງ;
9. ແລວສາຍສົ່ງໄຟຟ້າ;
10. ຊັ້ນຂໍ້ມູນອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການສ້າງແຜນທີ່ວຽກສະເພາະ

**ມາດຕາ 29 ການສ້າງແຜນທີ່ວຽກສະເພາະ**

ການສ້າງແຜນທີ່ວຽກສະເພາະ ແມ່ນ ຂະບວນການສ້າງແຜນທີ່ຮັບໃຊ້ວຽກສະເພາະ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ວຽກງານໃດໜຶ່ງຂອງຕົນ ໂດຍນຳໃຊ້ຂໍ້ມູນເຄົ້າການສຳຫຼວດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ແຜນທີ່ວຽກສະເພາະ ມີ ດັ່ງນີ້:

1. ແຜນທີ່ເສັ້ນຊາຍແດນແຫ່ງຊາດ;
2. ແຜນທີ່ເສັ້ນເຂດແດນເຊື່ອມຕໍ່;
3. ແຜນທີ່ການປົກຄອງ;
4. ແຜນທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ແຜນທີ່ຕາດິນ;
6. ແຜນທີ່ປ່າໄມ້;
7. ແຜນທີ່ອຸທົກກະສາດ;
8. ແຜນທີ່ຕາໜ່າງຄົມມະນາຄົມ;
9. ແຜນທີ່ກິດຈະກຳໂຄງການໃຕ້ດິນ;
10. ແຜນທີ່ຄວາມສ່ຽງໄພພິບັດ;
11. ແຜນທີ່ທໍລະນີສາດ ແລະ ແຮ່ທາດ;
12. ແຜນທີ່ວຽກສະເພາະອື່ນທີ່ກ່ຽວຂ້ອງ.

ພາຍຫຼັງສຳເລັດການສ້າງແຜນທີ່ວຽກສະເພາະແລ້ວ ຂະແໜງການທີ່ກ່ຽວຂ້ອງ ຕ້ອງເປັນຜູ້ປະກາດໃຊ້ຢ່າງເປັນທາງການ.

ສຳລັບ ລາຍລະອຽດຂອງການສ້າງແຜນທີ່ວຽກສະເພາະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 30 ການຂຽນຊື່ພູມີປະເທດໃນການສ້າງແຜນທີ່ວຽກສະເພາະ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ສ້າງແຜນທີ່ຮັບໃຊ້ວຽກງານສະເພາະໃດໜຶ່ງຂອງຕົນ ຕ້ອງຂຽນຊື່ພູມີປະເທດ ຕາມຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ເພື່ອໃຫ້ສາມາດນຳໃຊ້ຂໍ້ມູນຮ່ວມກັນໄດ້.

ອ່ານຕໍ່ສະບັບໜ້າ...




# ທິດຮານຈານຮ້າງ ຊຽງນ້ອຍສາກກະເບືອ

ໂດຍ: ດັ້ນກົບເມກ

ຄົນລາວບາງເຂດ ຈະໄດ້ຍິນຄົນເຖົ້າເວົ້າໃສ່ຫູ ເຊິ່ງປຽບເປີຍວ່າ: ທິດຮານຈານຮ້າງ ຊຽງນ້ອຍສາກກະເບືອ ເຊິ່ງມັນເປັນວິທີການເວົ້າໃຫ້ສັ້ນແບບໜຶ່ງຂອງຄົນລາວ ເພື່ອຢາກສອນອັນໃດໜຶ່ງ ຫລື ສື່ສານອັນໃດໜຶ່ງ ແຕ່ຈະໃຊ້ສຳນວນວາຈາທີ່ແປນແນ່ ເຊື່ອງຄວາມໝາຍນຳ ເພື່ອໃຫ້ຜູ້ຟັງໄດ້ຮູ້ຈັກໃຊ້ຫົວຄິດທົບທວນພຶດຕິກຳຕົນເອງ.

ຄຳວ່າ ຮານ ພາສາລາວແປວ່າ ເຮັດໃຫ້ສັ້ນ, ຕັດໃຫ້ສັ້ນ ເຊິ່ງມີຄວາມໝາຍໃນທາງຫຍໍ້ລົງ-ແຄບລົງ ເຊິ່ງແມ່ນຄົນຜູ້ເຄີຍບວດຮຽນຂຽນອ່ານ ທີ່ສັງຄົມລາວເອີ້ນວ່າ ທິດ ໝາຍເຖິງຜູ້ມີຄວາມຮູ້ຜ່ານການບວດຮຽນ ມີຜູ້ຮູ້ບາງທ່ານຕີຄວາມວ່າ ທິດ ມາຈາກຄຳວ່າບັນດິດ ທີ່ແປວ່ານັກປາດ ຫລື ຜູ້ຮູ້ ດັ່ງນັ້ນ, ເມື່ອ ທິດ ທີ່ເຄີຍບວດຮຽນເປັນຜູ້ຮູ້ຫລັກການ-ຮີດຄອງທຳນຽມຕ່າງໆ ແຕ່ຕ່າວພາໂລບໍ່ຖືປະຕິບັດຂີ້ຄ້ານມັກງ່າຍ ບໍ່ສຶກສາໃຫ້ຮູ້ແຈ້ງ ເມື່ອຄົນອ້ອມຂ້າງຖາມ ຫລື ສັງຄົມຖາມກໍຕອບໃຫ້ສັ້ນຕາມພາສາບວດ ແຕ່ບໍ່ຮູ້ ຫລື ຮຽນ ແຕ່ບໍ່ຈື່ຍ້ອນຂີ້ຄ້ານບໍ່ເອົາໃຈໃສ່.

ຈານຮ້າງ ຄຳວ່າຈານ ເລີຍຂຶ້ນມາຈາກທິດ ເພາະຖືກັນວ່າຜູ້ເຄີຍບວດຜ່ານການທົດສິງຈາກປະຊາຊົນຍົກຂຶ້ນເປັນທິດຈານ ຫລື ຈານຄູ, ຈານສຳເລັດ ຍ່ອມເປັນຜູ້ເຄົາລົບນັບຖືຂອງສັງຄົມ ແຕ່ ພຶດຕິກຳຜູ້ກ່ຽວຜັດກົງກັນຂ້າມ ແທນທີ່ຈະນຳພາສັງຄົມເຮັດແນວດີ, ປະພຶດເປັນແບບຢ່າງ ແຕ່ກັບໄປມົ້ວສຸມເກືອກກົ້ວອະບາຍຍະມຸກ ບໍ່ເປັນແບບຢ່າງໃຫ້ສັງຄົມ ຈຶ່ງບໍ່ຕ້ອງເວົ້າເຖິງຜູ້ເຄີຍບວດເປັນຈົວນ້ອຍສິກອອກມາຈຶ່ງໄດ້ເປັນແຕ່ຊຽງສາກກະເບືອ.

ສັງລວມວ່າ: ພຶດຕິກຳຂອງຄົນໃນສັງຄົມເຮົາ ມັນຜູກພັນ ແລະ ພົວພັນກັນ, ທິດຈານ, ຊຽງນ້ອຍ ກໍຕ້ອງໄດ້ປະພຶດເປັນແບບຢ່າງ-ພໍ່ແມ່ຜູ້ປົກຄອງກໍເຊັ່ນກັນ ບໍ່ແມ່ນເວົ້າຢ່າງໜຶ່ງ ແຕ່ການກະທຳກົງກັນຂ້າມກັບຄຳເວົ້າ ຢ່າລືມວ່າການກະທຳຕົວຈິງສຳຄັນກວ່າຄຳເວົ້າ.

# ສຳເລັດການຢ້ຽມຢາມຣາຊະອານາຈັກໄທ ຢ່າງເປັນທາງການ




















## ຕື່ນສຽງປືນ

**# ໂດຍ: ບ່າວກະບື**

ວັນໜຶ່ງ ຜູ້ສາວສ່ຳນ້ອຍ ກຳລັງຈ້ອງຕາເບິ່ງເຫລົ່າທະຫານ ເຝິກຍິງປືນເຫລັກຍາວຢູ່ສະໜາມ. ທັນໃດນັ້ນ ປືນຜົ່ນສຽງອອກມາ. ຝ່າຍຜູ້ສາວຫົດໂຕຈົນລີບ ແລ້ວຖອຍໄປເຂົ້າອ້ອມກອດ ຂອງບ່າວທະຫານຄົນໜຶ່ງ ເຊິ່ງຢືນຢູ່ດ້ານຫລັງ.

ນາງເວົ້າສຽງກະຕຸກກະຕັກແບບອາຍໆອອກມາວ່າ: "ໂອຍ, ນ້ອງຢ້ານສຽງປືນໂພດ, ຂໍໂທດເນີອ້າຍ"

"ບໍ່ເປັນຫຍັງ, ບໍ່ເປັນຫຍັງດອກ, ເທື່ອໜ້າໃຫ້ນ້ອງມາໃໝ່ ພວກອ້າຍຊິເຝິກຍິງປືນໃຫຍ່" ອ້າຍບ່າວທະຫານເວົ້າອອກມາ.

## FIRE EFFECTS

**# By: BAOKBU**

A young girl was watching soldiers firing their rifles on the range one day. Suddenly a rifle volley rang out. The girl shrank back directly into the arms of a soldier who was standing behind her.

Oh! she stammered with a blush, "I was so frightened by the rifles. Will you please forgive me?"

"Not at all, not at all" spoke up the soldier. "Come next time and watch artillery".

# ກອງປະຊຸມຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ

ອີງຕາມການລາຍງານໃຫ້ຮູ້ວ່າ: ໃນຕອນເຊົ້າວັນທີ 30 ຕຸລາ 2022 ກອງປະຊຸມຄັ້ງທີ 37 ຂອງຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ ສະໄໝທີ 13 ໄດ້ອັດລົງດ້ວຍຜົນສຳເລັດອັນຈົບງາມ ພາຍຫລັງດຳເນີນມາແຕ່ວັນທີ 26 ຕຸລາຜ່ານມາ ຢູ່ທີ່ຫໍສະພາປະຊາຊົນ ນະຄອນຫລວງປັກກິ່ງ ປະເທດຈີນ.

ໂອກາດດັ່ງກ່າວ, ທ່ານ ສີ ຈິ້ນຜິງ ປະທານປະເທດຈີນ ໄດ້ລົງນາມໃນດຳລັດເລກທີ 122, 123, 124 ແລະ 125. ທ່ານ ລີ້ຈ້ານຊູ່ ປະທານຄະນະປະຈຳສະພາປະຊາຊົນແຫ່ງຊາດຈີນ ສະໄໝທີ 13 ໄດ້ເປັນປະທານອັດກອງປະຊຸມ.

ກອງປະຊຸມໄດ້ລົງຄະແນນສຽງ ແລະ ຜ່ານການຮັບຮອງບົດລາຍງານຜົນການພິຈາລະນາຍັດຕິທີ່ກ່ຽວຂ້ອງທີ່ສະເໜີໂດຍຄະນະກຳມາທິການຊົນເຜົ່າ, ຄະນະກຳມາທິການກອດກາ ແລະ ຕຸລາການ, ຄະນະກຳມາທິການການເງິນເສດຖະກິດ, ຄະນະກຳມາທິການການສຶກສາ, ວິທະຍາສາດ, ວັດທະນະທຳ ແລະ ສາທາລະນະສຸກ, ຄະນະກຳມາທິການວຽກງານການຕ່າງປະເທດ, ຄະນະກຳມາທິການປົກປັກຮັກສາສິ່ງແວດລ້ອມ ແລະ ຊັບພະຍາກອນ ແລະ ຄະນະກຳມາທິການກໍ່ສ້າງສັງຄົມ.

**ແຫລ່ງຂ່າວ: CRI**

# ຜົນການເລືອກຕັ້ງປະທານາທິບໍດີບຣາຊິວ

ຕາມການລາຍງານຂ່າວໃນວັນທີ 31 ຕຸລາຜ່ານມາ ໃຫ້ຮູ້ວ່າ: ຄະນະກຳມະການເລືອກຕັ້ງຂອງບຣາຊິວ ໄດ້ລາຍງານຜົນຢ່າງບໍ່ເປັນທາງການ ໃນການເລືອກຕັ້ງປະທານາທິບໍດີ ເຊິ່ງໄດ້ຈັດຂຶ້ນໃນວັນອາທິດທີ 31 ຕຸລານີ້ ເມື່ອນັບຄະແນນສຽງແລ້ວຫລາຍກວ່າ 99% ປາກົດວ່າ ທ່ານ ລູອິຊ ອີກນາຊີໂອ ລູລາ ດາ ຊິວວາ ອະດີດປະທານາທິບໍດີ ອາຍຸ 77 ປີ ທີ່ລົງສະໝັກໃນນາມຂອງພັກກຳມະກອນ ໄດ້ຮັບຄະແນນສຽງສະໜັບສະໜູນ 50,89% ກວມ 60,21 ລ້ານກວ່າສຽງ.

ໃນຂະນະທີ່ທ່ານ ຈາອີ ໂບລໂຊນາຣູ ປະທານາທິບໍດີຄົນປັດຈຸບັນ ຈາກພັກອະນຸລັກນິຍົມ ອາຍຸ 67 ປີ ໄດ້ຮັບສຽງສະໜັບສະໜູນ 49,11% ເທົ່າກັບ 58,11 ລ້ານກວ່າສຽງ.

ເຖິງແມ່ນວ່າຜົນການນັບບັດຄະແນນຍັງບໍ່ທັນສຳເລັດ ແຕ່ສານເລືອກຕັ້ງສູງສຸດຂອງບຣາຊິວໃຫ້ຄວາມເຫັນວ່າ "ພຽງພໍຕາມຫລັກທາງຄະນິດສາດ" ທີ່ຈະຊີ້ໃຫ້ເຫັນຢ່າງຈະແຈ້ງວ່າ ໃຜເປັນຜູ້ຊະນະ.

ທ່ານ ລູອິຊ ອີກນາຊີໂອ ລູລາ ດາ ຊິວວາ ຜູ້ທີ່ກຳລັງກະກຽມທີ່ຈະກັບຄືນມາດຳລົງຕຳແໜ່ງ ສະໄໝທີ 3 ໃນວັນທີ 1 ມັງກອນ 2023 ເຄີຍໄດ້ຮັບຄວາມນິຍົມໃນລະດັບສູງສຸດ ເມື່ອດຳລົງຕຳແໜ່ງຢູ່ໃນວາລະລະຫວ່າງ 2003-2010 ຈາກການປັບປຸງຄຸນນະພາບຊີວິດຂອງກຸ່ມປະຊາຊົນບຣາຊິວໃນລະດັບພື້ນຖານ ແຕ່ຄວາມນິຍົມຂອງທ່ານຫລຸດລົງຫລັງຈາກສານໄດ້ຕັດສິນໃຫ້ຈຳຄຸກໃນຂໍ້ຫາສໍ້ລາດບັງຫລວງລະຫວ່າງປີ 2017-2019.

**ແຫລ່ງຂໍ້ມູນ: REUTERS**


| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສົງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ<br>ທ່ານ ເປຄຳ ລໍຄຳສອນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |